ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

**ທະນາຄານແຫ່ງ ສປປ ລາວ** ເລກທີ 03/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20/ມິຖຸນາ/2008

# ຂໍ້ກໍານົດ

## ວ່າດ້ວຍການຄຸ້ມຄອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999.
- ອີງຕາມການຄົ້ນຄວ້າ ແລະ ນໍາສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ກໍານົດ:**

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ກໍານົດສະບັບນີ້ ນໍາໃຊ້ເພື່ອຄຸ້ມຄອງການສ້າງຕັ້ງ ແລະ ດໍາເນີນທຸລະກິດ ຂອງບັນດາສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃນ ສປປ ລາວ ໂດຍການວາງມາດຕະການແນໃສ່ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ສອດຄ່ອງໃນການຈັດຕັ້ງປະຕິບັດ.

**ມາດຕາ 2. ຄວາມໝາຍຄໍາສັບທີ່ນໍາໃຊ້ໃນຂໍ້ກໍານົດສະບັບນີ້**

- **"ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ"** ໝາຍເຖິງການຮ່ວມກຸ່ມຂອງປະຊາຊົນ ເພື່ອທໍາການເຄື່ອນໄຫວກິດຈະກໍາ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວກິດຈະກໍາທີ່ສອດຄ່ອງກັບຂໍ້ກໍານົດສະບັບນີ້.

- **"ບັນດາກິດຈະກຳ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ"** ໝາຍເຖິງການປ່ອຍເງິນກູ້, ການຮັບຝາກເງິນ ແລະ ການບໍລິການການເງິນອື່ນໆ ໃຫ້ແກ່ສະມາຊິກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕາມທີ່ໄດ້ກຳນົດໄວ້ ຢູ່ໃນຂໍ້ກຳນົດສະບັບນີ້.
- **"ເງິນຝາກແບບສະໝັກໃຈ"** ໝາຍເຖິງເງິນຝາກຂອງສະມາຊິກ ທີ່ສາມາດຝາກ ຫລື ຖອນໄດ້ທຸກເວລາ ຫລື ຕາມການຕົກລົງໄວ້ກັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- **"ເງິນຝາກແບບພັນທະ"** ໝາຍເຖິງເງິນຝາກຄ້ຳປະກັນເງິນກູ້ ທີ່ສະມາຊິກກູ້ຢືມເງິນນຳສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕ້ອງໄດ້ນຳມາຝາກໄວ້ກັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທີ່ປ່ອຍກູ້ ຕາມອັດຕາສ່ວນ ຫລື ວົງເງິນທີ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວວາງອອກ. ສະມາຊິກຜູ້ທີ່ກູ້ຢືມສາມາດຖອນເງິນຝາກດັ່ງກ່າວໄດ້ທັນທີ ຖ້າຫາກຊຳລະໜີ້ສິນຄືນຢ່າງຄົບຖ້ວນແລ້ວ.
- **"ເງິນກີບ"** ແມ່ນເງິນຕາຂອງຊາດລາວ.
- **"ໃບອະນຸຍາດ"** ໝາຍເຖິງ ໃບຢັ້ງຢືນການສ້າງຕັ້ງ ແລະ ເຄື່ອນໄຫວກິດຈະກຳ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ.
- **"ພາກສ່ວນທີ່ມີສ່ວນພົວພັນ"** ໝາຍເຖິງ ບັນດາຜູ້ບໍລິຫານຂັ້ນສູງແລະສະມາຊິກຄອບຄົວໃກ້ຊິດຂອງຜູ້ບໍລິຫານຂັ້ນສູງ.
- **"ຜູ້ບໍລິຫານຂັ້ນສູງ"** ໝາຍເຖິງສະມາຊິກຂອງສະພາບໍລິຫານ, ຄະນະກຳມະການກວດສອບ ຫລື ຄະນະກຳມະການສິນເຊື່ອ ຫລື ຜູ້ອຳນວຍການຂັ້ນອາວຸໂສອື່ນໆ.
- "**ສະມາຊິກຄອບຄົວໃກ້ຊິດ**" ໝາຍເຖິງ ພໍ່ແມ່, ພໍ່ແມ່ລ້ຽງ, ສາມີ ພັນລະຍາ, ລູກ, ລູກລ້ຽງ ຫລື ອ້າຍເອື້ອຍນ້ອງ .
- **"ທຶນ"** ໝາຍເຖິງທຶນເບື້ອງຕົ້ນ, ຄັງສະສົມຕາມລະບຽບການ, ເງິນຊ່ວຍເຫຼືອລ້າ ແລະ ກຳໄລຂາດທຶນສະສົມ.
- **"ທຶນເບື້ອງຕົ້ນ"** ໝາຍເຖິງຈຳນວນຮຸ້ນທີ່ໄດ້ປະກອບເປັນທຶນລິເລີ່ມ ຂອງສະມາຊິກຜູ້ກໍ່ຕັ້ງທັງໝົດໃນເວລາສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- **"ເງິນກູ້ປົກກະຕິ"** ໝາຍເຖິງເງິນກູ້ທີ່ສາມາດປະຕິບັດການຊຳລະໄດ້ຕາມເງື່ອນໄຂສັນຍາຢ່າງຄົບຖ້ວນ.
- **"ເງິນກູ້ບໍ່ເກີດດອກອອກຜົນ" ໝາຍເຖິງເງິນກູ້ທີ່ມີ :**
  1. ຕົ້ນທຶນ ແລະ/ຫລື ດອກເບ້ຍຈະເປັນທັງໝົດ ຫລື ສ່ວນໃດສ່ວນໜຶ່ງ ທີ່ບໍ່ສາມາດຊຳລະໄດ້ຕາມແຜນການທີ່ໄດ້ກຳນົດໄວ້ ຊຶ່ງຄ້າງຊຳລະແຕ່ສາມສິບ (30) ວັນຂຶ້ນໄປ;
  2. ຕົ້ນທຶນ ທີ່ຄ້າງຮັບນັບແຕ່ສາມສິບ (30) ວັນຂຶ້ນໄປ ຫລື ດອກເບ້ຍທີ່ຄ້າງຮັບນັບແຕ່ ສາມສິບ (30) ວັນຂຶ້ນໄປ ຫາກນຳໄປບວກກັບຕົ້ນທຶນເງິນກູ້ບ້ວງເດີມ ທີ່ມີຢູ່ແລ້ວ, ບວກກັບເງິນກູ້ບ້ວງປ່ອຍໃໝ່ ຫລື ເງິນກູ້ທີ່ມີການປັບປຸງໂຄງສ້າງໜີ້.
- **"ເອກະສານທາງບັນຊີ"** ໝາຍເຖິງບັນຊີແຍກປະເພດທົ່ວໄປ, ບັນທຶກປະຈຳວັນ, ບັກທຶກເງິນສົດ, ສົມທົບບັນຊີຕ່າງໆ ແລະ ເອກະສານທາງບັນຊີອື່ນໆທີ່ຈົດກ່າຍດ້ວຍມື ແລະ/ຫລື ທາງອີເລັກໂຖຼນິກ ທີ່ທາງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດນຳໃຊ້.

- **"ສະມາຊິກຜູ້ກໍ່ຕັ້ງ"** ໝາຍເຖິງບັນດາສະມາຊິກທີ່ລິເລີ່ມ ໃນເວລາສະເໜີຂໍສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- **"ສະມາຊິກ"** ໝາຍເຖິງບຸກຄົນທີ່ຊໍາລະຈໍານວນຮຸ້ນຕໍ່າສຸດ, ເພື່ອເຂົ້າຮ່ວມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- **"ຕົວແທນ"** ໝາຍເຖິງບຸກຄົນ ຫລື ວິສາຫະກິດ ທີ່ສ້າງສາຍພົວພັນທາງທຸລະກິດ ເພື່ອເຈລະຈາສັນຍາໂດຍບໍ່ໄດ້ເປັນຜູ້ຕາງໜ້າໃຫ້ຝ່າຍໃດຝ່າຍໜຶ່ງ.
- **"ກົດລະບຽບພາຍໃນ"** ໝາຍເຖິງກົດລະບຽບທີ່ຮັບຮອງໂດຍກອງປະຊຸມໃຫຍ່ສະມາຊິກ ຊຶ່ງກໍານົດຂອບເຂດຂອງການເປັນສະມາຊິກ, ຮຸ້ນຕໍ່າສຸດສໍາລັບການເປັນສະມາຊິກ, ສິດ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ຜູ້ອໍານວຍການ, ມື້ປະຊຸມຂອງກອງປະຊຸມໃຫຍ່ສະມາຊິກ, ການລົງຄະແນນສຽງໃນເວລາປະຊຸມ, ຜະລິດຕະພັນ ແລະ ການບໍລິການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
- **"ຮຸ້ນ"** ໝາຍເຖິງຈໍານວນເງິນປະກອບ ທີ່ຕ້ອງຊໍາລະໂດຍບຸກຄົນ ທີ່ຈະມາເປັນສະມາຊິກ ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

### ມາດຕາ 3. ສະຖານະພາບທາງດ້ານກົດໝາຍ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ຈາກທະນາຄານແຫ່ງ ສປປ ລາວ ແມ່ນນິຕິບຸກຄົນໜຶ່ງໃນຮູບແບບວິສາຫະກິດລວມໝູ່, ມີສິດສະເໝີພາບ ຕໍ່ໜ້າກົດໝາຍ, ເຄື່ອນໄຫວທຸລະກິດຕາມສິດ ແລະ ຄວາມຮັບຜິດຊອບທີ່ສອດຄ່ອງກັບຂໍ້ກໍານົດສະບັບນີ້.

### ມາດຕາ 4. ທີ່ຕັ້ງ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ຈາກທະນາຄານແຫ່ງ ສປປ ລາວ ສາມາດເປີດສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການໄດ້ ໃນຂອບເຂດທົ່ວປະເທດ ໂດຍສອດຄ່ອງກັບໃບອະນຸຍາດສ້າງຕັ້ງ. ໃນກໍລະນີທີ່ມີການຍົກຍ້າຍທີ່ຕັ້ງສໍານັກງານ (ທັງສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ), ລວມທັງການເປີດສາຂາ ຫລື ໜ່ວຍບໍລິການໃໝ່ ຕ້ອງໄດ້ຮັບການເຫັນດີອະນຸມັດຢ່າງເປັນລາຍລັກອັກສອນຈາກ ທະນາຄານແຫ່ງ ສປປ ລາວ.

## ໝວດທີ II
## ການສ້າງຕັ້ງ, ການປະຕິເສດການສ້າງຕັ້ງ, ຄ່າບໍລິການ ແລະ ການຖອນໃບອະນຸຍາດສ້າງຕັ້ງ

**ມາດຕາ 5. ເງື່ອນໄຂຂອງການສະເໜີຂໍສ້າງຕັ້ງ**

ກຸ່ມບຸກຄົນໃດ ທີ່ຕ້ອງການສ້າງຕັ້ງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃນ ສປປ ລາວ ຕ້ອງ:

1. ມີສິ່ງທີ່ຄ້າຍຄືກັນ ເຊັ່ນ : ມີອາຊີບດຽວກັນ ຫລື ອົງກອນດຽວກັນ ຫລື ປະຊາຊົນອາໃສຢູ່ໃນຂົງເຂດດຽວກັນເປັນຕົ້ນ;

2. ບັນລຸນິຕິພາວະ, ສັນຊາດລາວ ແລະ ດຳລົງຊີວິດຢູ່ໃນ ສປປ ລາວ;

3. ກ່ຽວກັບສະມາຊິກຂອງສະຫະກອນມີ 2 ເງື່ອນໄຂດັ່ງນີ້:

   (1). ສະເພາະສະຫະກອນທີ່ສ້າງຕັ້ງຂຶ້ນໃໝ່ ຕ້ອງມີສະມາຊິກລິເລີ່ມກໍ່ຕັ້ງ ຢ່າງໜ້ອຍສິບ (10) ຄົນ ແລະ ມີສະມາຊິກເບື້ອງຕົ້ນຢ່າງໜ້ອຍ 100 ຄົນ.

   (2). ສະເພາະສະຖາບັນການເງິນ ຫລື ສະຫະກອນ (ປະເພດເຄິ່ງທາງການ) ທີ່ເຄີຍດຳເນີນທຸລະກິດມາກ່ອນທີ່ມີຈຸດປະສົງ ຫັນເອົາການເຄື່ອນໄຫວຂອງຕົນ ສ້າງຕັ້ງເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດນັ້ນ, ຕ້ອງມີສະມາຊິກບໍ່ໃຫ້ຫຼຸດ 250 ຄົນ, ມີຍອດເງິນຝາກສະໝັກໃຈສາມຮ້ອຍ (300) ລ້ານກີບ ຂຶ້ນໄປ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.

ໂດຍທັງ 2 ເງື່ອນໄຂຂ້າງເທິງນີ້ ຈະຕ້ອງບໍ່ມີສະມາຊິກຜູ້ໃດຜູ້ໜຶ່ງ ຫລື ສະມາຊິກຜູ້ໃດໜຶ່ງຮ່ວມກັບພາກສ່ວນທີ່ມີສາຍພົວພັນກັບສະມາຊິກ ຖືຮຸ້ນຫຼາຍກວ່າສິບສ່ວນຮ້ອຍ (10%) ຂອງທຶນເບື້ອງຕົ້ນ.

4. ສະຫະກອນທັງ 2 ເງື່ອນໄຂດັ່ງກ່າວ ຕ້ອງມີທຶນຈົດທະບຽນເບື້ອງຕົ້ນຢ່າງໜ້ອຍໜຶ່ງຮ້ອຍ (100) ລ້ານກີບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 6. ເອກະສານປະກອບໃນການສະເໜີຂໍສ້າງຕັ້ງ**

1. ສຳນວນເອກະສານສະເໜີຂໍອະນຸຍາດສ້າງຕັ້ງຕ້ອງປະກອບດ້ວຍເອກະສານສະບັບຕົ້ນ ດັ່ງຕໍ່ໄປນີ້:

   (1). ຄຳຮ້ອງຕາມແບບຟອມທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ;
   (2). ໃບຢັ້ງຢືນຮັບເງິນຈາກກົມບໍລິການ ທະນາຄານແຫ່ງ ສປປ ລາວ ຫລື ແຊັກເງິນສົດ ຈຳນວນຫ້າແສນ (500.000) ກີບ (ຄ່າບໍລິການໃນການຍື່ນໃບຄຳຮ້ອງສະເຫນີຂໍສ້າງຕັ້ງ) ຫລື ຕາມການປັບປຸງແປງຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
   (3). ກົດລະບຽບພາຍໃນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ຕາມຮ່າງກົດລະບຽບພາຍໃນ) ຂອງທະນາຄານແຫ່ງ ສປປ ລາວ ວາງອອກ;
   (4). ເອກະສານຫຼັກຖານທີ່ຢັ້ງຢືນໃຫ້ເຫັນໄດ້ວ່າ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ສະເໜີຂໍສ້າງຕັ້ງມີທຶນຕ່ຳສຸດໜຶ່ງຮ້ອຍ (100) ລ້ານກີບ ທີ່ໄດ້ລະບຸໄວ້ໃນ ມາດຕາ 17 ຂອງຂໍ້ກຳນົດສະບັບນີ້.

(5). ບົດບັນທຶກກອງປະຊຸມຂອງສະມາຊິກຜູ້ກໍ່ຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ກ່ຽວກັບການສ້າງຕັ້ງສະຫະກອນ, ໂຄງຮ່າງການຈັດຕັ້ງ, ການເລືອກຕັ້ງສະມາຊິກສະພາບໍລິຫານ, ຄະນະກຳມະການສິນເຊື່ອ ແລະ ຄະນະກຳມະການກວດກາ;

(6). ນະໂຍບາຍກ່ຽວກັບການລົງທຶນ, ການໃຫ້ສິນເຊື່ອ, ພະນັກງານ, ການເກັບກູ້ໜີ້ສິນ, ການສ້າງຄັງແຮເພື່ອໜີ້ທວງຍາກ ທີ່ຖືກອະນຸມັດໂດຍກອງປະຊຸມສະມາຊິກຜູ້ກໍ່ຕັ້ງ;

(7). ແຜນວາດທີ່ຕັ້ງສຳນັກງານ, ແຜນການດຳເນີນທຸລະກິດ 3 ປີທຳອິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ສະເໜີຂໍສ້າງຕັ້ງ;

(8). ປະກອບຊີວະປະຫວັດ ຂອງບັນດາຜູ້ບໍລິຫານຂັ້ນສູງ (ສະພາບໍລິຫານ) ແລະ ຜູ້ອຳນວຍການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

(9). ລາຍຊື່ ແລະ ໜ້າທີ່ຮັບຜິດຊອບໃນເບື້ອງຕົ້ນ ຂອງພະນັກງານ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

2. ເພື່ອໃຫ້ສາມາດກຳນົດໄດ້ ຄວາມເໝາະສົມທາງດ້ານວິຊາການ ຫລື ຄວາມຊຳນິຊຳ ນານ ຂອງບຸກຄົນທີ່ຈະສະເໜີເຂົ້າມາເປັນຜູ້ບໍລິຫານຂັ້ນສູງ ແລະ ຜູ້ອຳນວຍການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາພື້ນຖານການສຶກສາທາງດ້ານວິຊາສະເພາະການເງິນ ຫລື ການທະນາຄານ, ການບັນຊີ, ການກວດສອບ ແລະ ການບໍລິຫານທຸລະກິດຂອງບຸກຄົນດັ່ງກ່າວ.

## ມາດຕາ 7. **ເງື່ອນໄຂຂອງການເປັນສະມາຊິກ**

ບຸກຄົນໃດໜຶ່ງທີ່ຈະເຂົ້າມາເປັນສະມາຊິກ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕ້ອງ:

1. ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
2. ບັນລຸນິຕິພາວະຕາມກົດໝາຍຂອງ ສປປ ລາວ ວາງອອກ;
3. ເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດຕາມກົດໝາຍ;
4. ອື່ນໆ ຕາມທີ່ກົດລະບຽບພາຍໃນກຳນົດໄວ້.

## ມາດຕາ 8. **ບຸກຄົນທີ່ຂາດຄຸນສົມບັດ ຫລື ເງື່ອນໄຂ**

ສະມາຊິກຈະຂາດຄຸນສົມບັດດຳລົງຕຳແໜ່ງເປັນ ຜູ້ບໍລິຫານຂັ້ນສູງ ຫລື ຜູ້ອຳນວຍການ ຖ້າຫາກ:

1. ຖືກສານຕັດສິນວ່າມີຄວາມຜິດ ຖານສໍ້ໂກງ ຫລື ຖືກສືບສວນຄະດີທາງດ້ານວິຊາຊີບ, ບໍລິຫານ ຫລື ຖືກດຳເນີນຄະດີທາງກົດໝາຍ ທີ່ມີລັກສະນະເປັນຮູບປະທຳ;

2. ເຮັດຜິດຕໍ່ລະບຽບກົດໝາຍຕ່າງໆ ທີ່ຖືກກຳນົດຂຶ້ນ ເພື່ອເປັນການປົກປ້ອງສະມາຊິກສາທາລະນະຊົນ ຈາກຄວາມເສຍຫາຍທາງດ້ານການເງິນ ອັນເນື່ອງມາຈາກຄວາມບໍ່ຊື່ສັດ ຫລື ຂາດຄວາມ

ສາມາດ ຫລື ກະທຳໃນທາງບໍ່ດີ ຂອງບຸກຄົນທີ່ເຄື່ອນໄຫວໃຫ້ບໍລິການກ່ຽວກັບ ທະນາຄານ, ການປະກັນໄພ, ການລົງທຶນ ຫລື ການບໍລິການດ້ານການເງິນອື່ນໆ;

3. ເຄີຍເປັນຜູ້ບໍລິຫານ ຫລື ຜູ້ອຳນວຍການຂອງສະຖາບັນໃດໜຶ່ງ ທີ່ເຄີຍຖືກຊຳລະສະສາງບັນຊີ ຫລື ກຳລັງຢູ່ພາຍໃຕ້ຂັ້ນຕອນການຊຳລະສະສາງບັນຊີ ຫລື ພາຍໃຕ້ການບໍລິຫານຂອງທະນາຄານແຫ່ງ ສປປ ລາວ ຫລື ຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ທີ່ຖືກແຕ່ງຕັ້ງ ເພື່ອດຳເນີນການຊຳລະສະສາງ;

4. ມີສ່ວນຮ່ວມໃນການເຮັດທຸລະກິດຕາມທີ່ ທະນາຄານແຫ່ງ ສປປ ລາວ ວິນິດໄສແລ້ວເຫັນວ່າແມ່ນການລັກໂລບ, ສໍ້ໂກງ, ບໍ່ຍຸຕິທຳ ຫລື ບໍ່ເໝາະສົມ ບໍ່ວ່າຈະຜິດກົດໝາຍແທ້ຈິງ ຫລື ບໍ່ ຫລືບໍ່ດັ່ງນັ້ນ ກໍເຮັດໃຫ້ຂາດຄວາມໜ້າເຊື່ອຖືຕໍ່ສັງຄົມ, ເສຍຊື່ສຽງໃນວິທີການເຮັດທຸລະກິດເປັນຕົ້ນ;

5. ມີສ່ວນຮ່ວມ ຫລື ພົວພັນກັບການເຮັດທຸລະກິດອື່ນໆ ທີ່ມີການປະພຶດ ໃນລັກສະນະເຮັດໃຫ້ມີຂໍ້ສົງໃສໃນຄວາມສາມາດ ຫລື ຄວາມເໝາະສົມໃນການຕັດສິນໃຈຂອງຜູ້ກ່ຽວ;

6. ຖືກປະກາດລົ້ມລະລາຍ;

7. ມີສ່ວນໃນສະຖາບັນການເງິນຈຸລະພາກອື່ນໆ ໃນຖານະເປັນລູກຈ້າງ, ຜູ້ຖືຮຸ້ນ ຫລື ຜູ້ຈັດການໃນລັກສະນະທີ່ມີຄວາມເປັນໄປໄດ້ ທີ່ຈະເຮັດໃຫ້ເກີດການຂັດຜົນປະໂຫຍດຕໍ່ກັນ.

**ມາດຕາ 9. ການພິຈາລະນາຄຳຮ້ອງຂໍສ້າງຕັ້ງ**

1. ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບ ຜົນຂອງການຄົ້ນຄວ້າ ສຳນວນເອກະສານໃນການສະເໜີຂໍສ້າງຕັ້ງ ພາຍໃນກຳນົດເວລາ ສາມສິບ (30) ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບສຳນວນເອກະສານຖືກຕ້ອງ ແລະ ຄົບຖ້ວນໃນການຂໍສ້າງຕັ້ງດັ່ງກ່າວ;

2. ພາຍໃນສາມສິບ (30) ວັນລັດຖະການ ຫຼັງຈາກທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງແລ້ວ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕ້ອງ :
   (1). ຊຳລະຄ່າບໍລິການໃນການອອກໃບອະນຸຍາດສ້າງຕັ້ງ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 14 ຂອງຂໍ້ກຳນົດສະບັບນີ້;
   (2). ຕ້ອງໄປສະເໜີ ຂໍຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນນຳຂະແໜງການກ່ຽວຂ້ອງ.

**ມາດຕາ 10. ຊື່ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ**

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໃສ່ຊື່ຕາມທີ່ໄດ້ລະບຸໄວ້ ຢູ່ໃນໃບອະນຸຍາດສ້າງຕັ້ງ. ຖ້າໃສ່ຊື່ເປັນພາສາສາກົນນຳ ກໍຕ້ອງຂຽນໄວ້ລຸ່ມພາສາລາວ ແລະ ໃຫ້ມີຄວາມໝາຍທີ່ສອດຄ່ອງຕາມຊື່ທີ່ໄດ້ລະບຸຢູ່ໃນໃບອະນຸຍາດສ້າງຕັ້ງເຊັ່ນດຽວກັນ;

2. ທະນາຄານແຫ່ງ ສປປ ລາວ ບໍ່ອະນຸຍາດໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃສ່ຊື່ຄືກັນກັບ ຊື່ທີ່ຖືກນຳໃຊ້ແລ້ວ ຫລື ຊື່ທີ່ໃກ້ຄຽງກັບຊື່ ທີ່ໄດ້ອອກອະນຸຍາດໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ອື່ນແລ້ວ;

3. ບໍ່ອະນຸຍາດໃຫ້ໃສ່ຊື່ບຸກຄົນ ເປັນຊື່ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

## ມາດຕາ 11. ອາຍຸຂອງໃບອະນຸຍາດສ້າງຕັ້ງ

ໃບອະນຸຍາດສ້າງຕັ້ງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດມີອາຍຸການນຳໃຊ້ສິບ (10) ປີ ເວັ້ນເສຍແຕ່ຈະມີການຖອນໃບອະນຸຍາດສ້າງຕັ້ງກ່ອນກຳນົດເວລາຈາກ ທະນະຄານແຫ່ງ ສປປ ລາວ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 16 ຂອງຂໍ້ກຳນົດສະບັບນີ້.

## ມາດຕາ 12. ການປະຕິເສດການສະເໜີຂໍສ້າງຕັ້ງ

1. ທະນາຄານແຫ່ງ ສປປ ລາວ ຈະບໍ່ອອກໃບອະນຸຍາດສ້າງຕັ້ງໃຫ້ ຖ້າພິຈາລະນາເຫັນວ່າ:

(1). ຜູ້ບໍລິຫານຂັ້ນສູງ ຫລື ຜູ້ອຳນວຍການ ກຳລັງມີສ່ວນຮ່ວມ ຫລື ມີແຜນທີ່ຈະເຂົ້າຮ່ວມໃນການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ມີຄຳສັ່ງຕັດສິນຂອງສານ ທີ່ຫ້າມບໍ່ໃຫ້ເຄື່ອນໄຫວກິດຈະກຳການເງິນຈຸລະພາກ ຫລື ການເງິນ - ການທະນາຄານ;

(2). ປະຕິບັດບໍ່ໄດ້ຕາມເງື່ອນໄຂ ທີ່ວາງໄວ້ໃນ ມາດຕາ 6 ແລະ 7 ຂອງຂໍ້ກຳນົດສະບັບນີ້;

(3). ເອກະສານຕ່າງໆ ທີ່ໄດ້ປະກອບມາ ເພື່ອສະເໜີຂໍສ້າງຕັ້ງ ບໍ່ສາມາດເຊື່ອຖືໄດ້;

(4). ແຜນທຸລະກິດທີ່ບໍ່ມີປະສິດທິຜົນ.

2. ໃນກໍລະນີທີ່ຖືກປະຕິເສດການອອກໃບອະນຸຍາດສ້າງຕັ້ງ, ທະນາຄານແຫ່ງ ສປປ ລາວ ຈະແຈ້ງເປັນລາຍລັກອັກສອນ ກ່ຽວກັບເຫດຜົນຂອງການປະຕິເສດ ແລະ ສົ່ງສຳນວນເອກະສານທີ່ໄດ້ປະກອບມາຄືນ ໃຫ້ແກ່ຜູ້ຂໍສ້າງຕັ້ງພາຍໃນສາມສິບ (30) ວັນລັດຖະການ.

## ມາດຕາ 13. ການຍື່ນໃບສະເໜີຂໍສ້າງຕັ້ງຄືນໃໝ່

1. ຜູ້ສະເໜີຂໍສ້າງຕັ້ງທີ່ຖືກປະຕິເສດ ສາມາດຊີ້ແຈງ ແລະ ປະກອບເອກະສານຄຳຮ້ອງຂໍສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຄືນໃໝ່ໄດ້ທຸກເວລາ ໂດຍບໍ່ຕ້ອງເສຍຄ່າບໍລິການຍື່ນຄຳຮ້ອງອີກ.

ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບຢ່າງເປັນລາຍລັກອັກສອນ ກ່ຽວກັບຜົນຂອງການຄົ້ນຄວ້າຄືນໃໝ່ ດັ່ງທີ່ໄດ້ລະບຸໄວ້ໃນ ມາດຕາ 9 ຂອງຂໍ້ກຳນົດສະບັບນີ້ .

2. ສຳລັບຜູ້ສະເໜີຂໍສ້າງຕັ້ງ ທີ່ມີການຍື່ນ ຂໍອະນຸຍາດສ້າງຕັ້ງຄືນໃໝ່ ເກີນກວ່າໜຶ່ງຄັ້ງ ຈະຕ້ອງ

ເສຍຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ກຳນົດສະບັບນີ້.

## ມາດຕາ 14. ຄ່າບໍລິການ

1. ຜູ້ຍື່ນຄຳຮ້ອງສະເໜີຂໍສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ເສຍຄ່າບໍລິການ ໃນການຍື່ນໃບຄຳຮ້ອງ ເປັນຈຳນວນເງິນຫ້າແສນ (500.000) ກີບ ຫລື ຕາມການປ່ຽນແປງຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

ໃນກໍລະນີທີ່ຄຳຮ້ອງຫາກຖືກປະຕິເສດ ຕາມກໍລະນີໃດໜຶ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ໂດຍ ທີ່ຜູ້ຂໍສ້າງຕັ້ງໄດ້ຍື່ນຄຳຮ້ອງຄືນໃໝ່ເກີນ 1 ຄັ້ງ, ຜູ້ຂໍສ້າງຕັ້ງຕ້ອງໄດ້ເສຍຄ່າບໍລິການຄືນໃໝ່ເປັນຈຳນວນເງິນຫ້າແສນ (500.000) ກີບ.

2. ພາຍຫຼັງທີ່ໄດ້ຮັບໃບອະນຸຍາດແລ້ວ, ພາຍໃນກຳນົດເວລາເຈັດ (7) ວັນລັດຖະການ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ຈ່າຍຄ່າບໍລິການ ການອອກໃບອະນຸຍາດສ້າງຕັ້ງຈຳນວນດັ່ງນີ້:

- ທຶນເບື້ອງຕົ້ນແຕ່ 100 ລ້ານ – 300 ລ້ານ ກີບ ແມ່ນເສຍ 1,000,000 ກີບ.
- ທຶນເບື້ອງຕົ້ນແຕ່ 300 ລ້ານ ກີບ ຂຶ້ນໄປ ແມ່ນເສຍ 1,500,000 ກີບ.

ຄ່າບໍລິການ ໃນການອອກໃບອະນຸຍາດສ້າງຕັ້ງແມ່ນຈ່າຍເທື່ອດຽວ ນັບແຕ່ໄດ້ຮັບອະນຸຍາດຈົນກວ່າຈະຍຸບເລີກ.

## ມາດຕາ 15. ຄ່າຄຸ້ມຄອງປະຈຳປີ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ເສຍຄ່າຄຸ້ມຄອງປະຈຳປີ ເປັນແຕ່ລະປີກ່ອນວັນທີ 30 ຂອງເດືອນມັງກອນ ຈຳນວນຫ້າແສນ (500.000) ກີບ (ຍົກເວັ້ນປີທຳອິດ).

## ມາດຕາ 16 ການຖອນໃບອະນຸຍາດສ້າງຕັ້ງ

ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດສ້າງຕັ້ງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງຄືນທັນທີ ຖ້າຫາກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ:

1. ບໍ່ມີການເຄື່ອນໄຫວພາຍໃນກຳນົດ ຫົກ (6) ເດືອນ ນັບແຕ່ມື້ທີ່ໄດ້ຮັບໃບອະນຸຍາດ ສ້າງຕັ້ງເປັນຕົ້ນໄປ;

2. ຮຸ້ນຫຼຸດລົງຕ່ຳກວ່າທຶນເບື້ອງຕົ້ນຕາມເງື່ອນໄຂຢ່າງໜ້ອຍໜຶ່ງຮ້ອຍ (100) ລ້ານກີບ ແລະ ບໍ່ສາມາດເພີ້ມຮຸ້ນໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວພາຍໃນ ຫົກ (6) ເດືອນ ນັບແຕ່ມື້ທີ່ທຶນເບື້ອງຕົ້ນຫຼຸດລົງ;

3. ຖືກສານຕັດສິນ ຫ້າມບໍ່ໃຫ້ເຄື່ອນໄຫວກິດຈະກຳ ກ່ຽວກັບສະຫະກອນສິນເຊື່ອ ແລະ ເງິນ

ຝາກປະຢັດ ຫລື ກໍລະນີທີ່ມີຜົນກະທົບຮ້າຍແຮງຕໍ່ການເມືອງ, ເສດຖະກິດ ແລະ ສັງຄົມສ່ວນລວມ;

4. ບໍ່ປະຕິບັດມາດຕະການແກ້ໄຂ ແລະ/ຫລື ບໍ່ປະຕິບັດຕາມການຕັດສິນຄະດີຕ່າງໆ ພາຍໃນໄລຍະເວລາທີ່ກຳນົດ ຫຼັງຈາກມີການໂຈະການເຄື່ອນໄຫວຊົ່ວຄາວ;

5. ບໍ່ປະຕິບັດຕາມມາດຕາໃດມາດຕາໜຶ່ງ ທີ່ໄດ້ລະບຸໄວ້ໃນໃບອະນຸຍາດສ້າງຕັ້ງ ຫລື ມາດຕາໃດມາດຕາໜຶ່ງຂອງຂໍ້ກຳນົດສະບັບນີ້ວາງອອກ;

6. ບໍ່ສືບຕໍ່ດຳເນີນກິດຈະກຳຕໍ່ໄປ.

## ໝວດທີ III
## ທຶນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

### ມາດຕາ 17. ທຶນເບື້ອງຕົ້ນ

1. ທຶນເບື້ອງຕົ້ນຕ່ຳສຸດບໍ່ໃຫ້ຫຼຸດ ໜຶ່ງຮ້ອຍ (100) ລ້ານກີບ ຫລື ຕາມການກຳນົດຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;

2. ມູນຄ່າຮຸ້ນທີ່ຖືກກຳນົດຂຶ້ນ ແມ່ນອີງຕາມ ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ ແຕ່ບໍ່ໃຫ້ເກີນມູນຄ່າຮຸ້ນ ທີ່ກົດໝາຍກຳນົດໄວ້ ໜຶ່ງແສນ (100.000) ກີບ ຕໍ່ໜຶ່ງຮຸ້ນ;

3. ທຶນເບື້ອງຕົ້ນຕ້ອງເປັນເງິນສົດເທົ່ານັ້ນ.

### ມາດຕາ 18. ການນຳໃຊ້ຮຸ້ນ ແລະ ທຶນ

ຮຸ້ນ ແລະ ທຶນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກ ທະນາຄານແຫ່ງ ສປປ ລາວ ສາມາດນຳໃຊ້ໃນຈຸດປະສົງດັ່ງລຸ່ມນີ້:

1. ນຳໃຊ້ເຂົ້າໃນການກໍ່ສ້າງສຳນັກງານ ແລະ ປະກອບວັດຖຸເຕັກນິກທີ່ຈຳເປັນ ໃນການເຄື່ອນໄຫວທຸລະກິດຂອງຕົນ;

2. ນຳໃຊ້ເພື່ອເປັນແຫຼ່ງທຶນເຂົ້າໃນການປ່ອຍສິນເຊື່ອ;

3. ນຳໃຊ້ເຂົ້າໃນການລົງທຶນ ບົນພື້ນຖານການເຫັນດີອະນຸມັດຈາກທະນາຄານແຫ່ງ ສປປ ລາວ.

### ມາດຕາ 19. ການເຂົ້າເປັນສະມາຊິກກອງທຶນປົກປ້ອງຜູ້ຝາກເງິນ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງ ຈາກທະນາຄານ

ແຫ່ງ ສປປ ລາວ ຕ້ອງໄດ້ເຂົ້າເປັນສະມາຊິກກອງທຶນປົກປ້ອງຜູ້ຝາກເງິນ ແລະ ຕ້ອງໄດ້ມອບເງິນເຂົ້າກອງທຶນດັ່ງກ່າວໃນອັດຕາສ່ວນໃດໜຶ່ງ ຕາມລະບຽບການ ທີ່ກອງທຶນວາງອອກ ເພື່ອສ້າງເປັນກອງທຶນປົກປ້ອງສະມາຊິກຜູ້ທີ່ໄດ້ຝາກເງິນໄວ້ນຳ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ.

**ມາດຕາ 20. ຮຸ້ນ**

1. ຮຸ້ນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ບໍ່ສາມາດໂອນ, ຂາຍ ແລະ ປ່ຽນມືໄດ້;

2. ມູນຄ່າຂອງຮຸ້ນສາມາດຖອນເອົາເງິນຄືນໄດ້ ໃນກໍລະນີທີ່ຂາດຈາກ ການເປັນສະມາຊິກ ຫລືລາອອກ ຫາກບໍ່ມີຜົນກະທົບ ຕໍ່ສະພາບຄ່ອງ ແລະ ອັດຕາສ່ວນຄວາມພຽງພໍຂອງທຶນ;

3. ບໍ່ອະນຸຍາດໃຫ້ສະມາຊິກ ແລະ ພາກສ່ວນທີ່ມີສາຍພົວພັນ ຖືຮຸ້ນຫຼາຍກວ່າສິບສ່ວນຮ້ອຍ (10%) ຂອງຮຸ້ນທຶນ.

4, ຮຸ້ນບໍ່ສາມາດໃຊ້ເປັນຊັບຄ້ຳປະກັນເງິນກູ້.

## ໝວດທີ IV
## ການຈັດຕັ້ງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

**ມາດຕາ 21. ການຈັດຕັ້ງ**

ການຈັດຕັ້ງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະກອບດ້ວຍກອງປະຊຸມໃຫຍ່ສະມາຊິກ, ສະພາບໍລິຫານ, ຄະນະກຳມະການສິນເຊື່ອ, ຄະນະກຳມະການກວດສອບ ແລະ ຜູ້ຈັດການ.

**ມາດຕາ 22. ກອງປະຊຸມໃຫຍ່ສະມາຊິກ**

1. ກອງປະຊຸມໃຫຍ່ສະມາຊິກແມ່ນການຈັດຕັ້ງສູງສຸດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ກອງປະຊຸມໃຫຍ່ສະມາຊິກສະໄໝສາມັນ ໄຂຂຶ້ນຢ່າງໜ້ອຍປີລະເທື່ອ ອີງຕາມການຕັດສິນໃຈຂອງສະພາບໍລິຫານ. ກອງປະຊຸມໃຫຍ່ຂອງສະມາຊິກປະຈຳປີໄຂຂຶ້ນຊ້າສຸດ ບໍ່ໃຫ້ເກີນສາມເດືອນພາຍຫຼັງສິ້ນປີ. ກອງປະຊຸມດັ່ງກ່າວຕ້ອງໄຂຂຶ້ນຢູ່ (ຕົວເມືອງ ຫລື ໝູ່ບ້ານ) ທີ່ສຳນັກງານໃຫຍ່ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕັ້ງຢູ່.

2. ໝາຍຮຽກໂຮມຂອງກອງປະຊຸມປະຈຳປີ ຫລື ກອງປະຊຸມຕ່າງໆ ຂອງສະມາຊິກ ພ້ອມດ້ວຍວາລະກອງປະຊຸມທີ່ຈະນຳສະເໜີໃນກອງປະຊຸມນັ້ນ ຕ້ອງຕິດປະກາດຢູ່ຫ້ອງການສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ເຜີຍແຜ່ຕໍ່ສີ່ມວນຊົນຢ່າງຊ້າສິບ (10) ວັນ ກ່ອນມື້ໄຂກອງປະຊຸມ.

3 ກອງປະຊຸມໃຫຍ່ສະມາຊິກສະໄໝສາມັນ ຫລື ສະໄໝວິສາມັນ ຈະໄຂຂຶ້ນໄດ້ກໍຕໍ່ເມື່ອ ຫາກມີສະມາຊິກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເຂົ້າຮ່ວມຢ່າງໜ້ອຍເຄິ່ງໜຶ່ງ ຂອງຮຸ້ນທັງໝົດ (ສຳລັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທີ່ມີສະມາຊິກບໍ່ເກີນ 300 ຄົນ) ຫລື ຢ່າງໜ້ອຍຕ້ອງມີສະມາຊິກ 150 ຄົນ ເຂົ້າຮ່ວມກອງປະຊຸມ (ສຳລັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທີ່ມີສະມາຊິກເກີນ 300 ຄົນ).

## ມາດຕາ 23. ມະຕິກອງປະຊຸມໃຫຍ່ສະມາຊິກ

1. ມະຕິກອງປະຊຸມໃຫຍ່ສະມາຊິກສະໄໝສາມັນ ແລະ ກອງປະຊຸມສະໄໝວິສາມັນ ຈະມີຜົນສັກສິດໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ຍົກເວັ້ນອຳນາດກົດໝາຍທີ່ສູງກວ່າ ຈະອະນຸຍາດໃຫ້ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ກຳນົດຕ່າງຈາກທີ່ກ່າວມານີ້.

2. ສະມາຊິກແຕ່ລະຄົນສາມາດລົງຄະແນນສຽງພຽງ 1 ຄົນ 1 ສຽງເທົ່ານັ້ນ ໂດຍບໍ່ຂຶ້ນກັບຈຳນວນຮຸ້ນ, ເງິນຝາກ ຫລື ມູນຄ່າທຸລະກິດທີ່ສະມາຊິກດັ່ງກ່າວ ດຳເນີນກັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ການລົງຄະແນນສຽງແມ່ນການລົງຄະແນນແບບປິດລັບ.

3. ສະມາຊິກຜູ້ໃດຜູ້ໜຶ່ງທີ່ມີສ່ວນກ່ຽວພັນ ຫລື ມີສະມາຊິກຄອບຄົວທີ່ໃກ້ຊິດ ກ່ຽວຂ້ອງກັບທຸລະກຳທີ່ກຳລັງຖືກພິຈາລະນາບັນຫາໃດບັນຫາໜຶ່ງ ໂດຍກອງປະຊຸມໃຫຍ່ສະມາຊິກ ຈະບໍ່ມີສິດໃນການລົງຄະແນນສຽງຕໍ່ທຸລະກຳດັ່ງກ່າວ.

## ມາດຕາ 24 . ສິດ ແລະ ຄວາມຮັບຜິດຊອບ ຂອງກອງປະຊຸມໃຫຍ່ສະມາຊິກ

ກອງປະຊຸມໃຫຍ່ສະໄໝສາມັນມີສິດ ແລະ ຄວາມຮັບຜິດຊອບດັ່ງນີ້:

1. ຮັບຟັງການລາຍງານຂອງສະພາບໍລິຫານກ່ຽວກັບຜົນການດຳເນີນທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບົດລາຍງານຖະນະການເງິນ, ງົບປະມານ ແລະ ແຜນການໃນຕໍ່ໜ້າສຳລັບປີຕໍ່ໄປ;
2. ຮັບຟັງການລາຍງານຂອງເຈົ້າໜ້າທີ່ກວດສອບບັນຊີພາຍນອກ;
3. ອະນຸມັດ ແລະ ລົງມະຕິຮັບຮອງເອົາບົດລາຍງານ ການດຳເນີນງານຂອງປີຜ່ານມາ;
4. ອະນຸມັດ ແລະ ຮັບຮອງເອົາບົດສະຫຼຸບການເງິນປະຈຳປີ;
5. ອະນຸມັດການແບ່ງເງິນປັນຜົນ ແລະ ຄັງຕ່າງໆ;
6. ແຕ່ງຕັ້ງ ຫລື ປົດຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະກຳມະການສິນເຊື່ອ ແລະ ຄະນະກຳມະການກວດກາ;
7. ອະນຸຍາດໃຫ້ສະພາບໍລິຫານ ດຳເນີນວຽກງານສະເພາະໃດໜຶ່ງ ໃນນາມຕາງໜ້າໃຫ້ກອງປະ

ຊຸມໃຫຍ່ສະມາຊິກ;

8. ກຳນົດຜູ້ກວດສອບພາຍນອກ ແລະ ອະນຸມັດຄ່າການກວດສອບ;
9. ສິດ ແລະ ຄວາມຮັບຜິດຊອບອື່ນໆ ສອດຄ່ອງກັບກົດໝາຍ ແລະ ກົດລະບຽບພາຍໃນຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 25. ກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ**

1. ກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ ອາດສາມາດຖືກຮຽກໂຮມ ຫລື ການສະເໜີຢ່າງ ເປັນລາຍລັກອັກສອນໂດຍ:

(1). ສຽງສ່ວນຫຼາຍ ຂອງສະມາຊິກສະພາບໍລິຫານ;

(2). ສຽງສ່ວນຫຼາຍ ຂອງຄະນະກຳມະການກວດກາພາຍໃນ;

(3). ຄະແນນສຽງຫ້າສິບສ່ວນຮ້ອຍ (50%) ຂອງສະມາຊິກທັງໝົດ (ສຳລັບສະຫະກອນ ທີ່ມີສະມາຊິກບໍ່ເກີນ 300 ຄົນ) ຫລື ຄະແນນສຽງຂອງສະມາຊິກ 150 ຄົນ (ສຳລັບ ສະຫະກອນ ທີ່ມີສະມາຊິກຫຼາຍກ່ວາ 300 ຄົນ);

(4). ບຸກຄົນທີ່ໄດ້ຮັບແຕ່ງຕັ້ງຈາກສານ;

(5). ຕົວແທນໃນການຊຳລະສະສາງ.

2. ກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ ຈະບໍ່ສາມາດຈັດຂຶ້ນໄດ້ ຖ້າຫາກມີສະມາຊິກ ເຂົ້າຮ່ວມໜ້ອຍກວ່າຫ້າສິບສ່ວນຮ້ອຍ (50%) ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີ ສະມາຊິກບໍ່ເກີນ 300 ຄົນ ຫລື ມີສະມາຊິກເຂົ້າຮ່ວມຕ່ຳກວ່າ 150 ຄົນ ສຳລັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີສະມາຊິກເກີນ 300 ຄົນ.

3. ມະຕິຂອງກອງປະຊຸມໃຫຍ່ຜູ້ ຖືຮຸ້ນສະໄໝວິສາມັນຈະມີຜົນສັກສິດໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄະ ແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງສະມາຊິກ ຫລື ຜູ້ຕາງໜ້າ ຂອງສະມາຊິກທັງໝົດ. ນອກຈາກຈະມີ ອຳນາດກົດໝາຍທີ່ສູງກວ່າອະນຸຍາດໃຫ້ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນ ຝາກປະຢັດ ກຳນົດແຕກຕ່າງຈາກທີ່ກ່າວມານີ້.

**ມາດຕາ 26. ສິດ ແລະ ຄວາມຮັບຜິດຊອບຂອງສະມາຊິກ**

ສະມາຊິກມີສິດ ແລະ ຄວາມຮັບຜິດຊອບດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມໃຫຍ່ສະມາຊິກ ແລະ ລົງຄະແນນສຽງ;
2. ໄດ້ຮັບເອກະສານຢ່າງຊ້າສິບ (10) ວັນ ກ່ອນມື້ໄຂກອງປະຊຸມປະຈຳປີ;
3. ໄດ້ຮັບແຈ້ງກ່ຽວກັບການດຳເນີນງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
4. ຍົກຄຳຖາມ ແລະ ປະກອບຄຳຄິດເຫັນເປັນລາຍລັກອັກສອນ ກ່ຽວກັບການບໍລິຫານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
5. ໄດ້ຮັບເງິນປັນຜົນຕາມອັດຕາສ່ວນຂອງຮຸ້ນທີ່ຕົນປະກອບ;
6. ຈ່າຍເງິນຄ່າຮຸ້ນສະມາຊິກຕາມກຳນົດເວລາທີ່ແນ່ນອນ;
7. ສະມາຊິກຕ້ອງຮັບຜິດຊອບຕໍ່ໜີ້ສິນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມມູນຄ່າຮຸ້ນທັງໝົດຂອງຕົນ;
8. ແຕ່ງຕັ້ງຜູ້ຕາງໜ້າໃດໜຶ່ງຢ່າງເປັນລາຍລັກອັກສອນ;
9. ສິດອື່ນໆ ທີ່ສອດຄ່ອງກັບກົດໝາຍ ແລະ ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

## ມາດຕາ 27. ໂຄງປະກອບຂອງສະພາບໍລິຫານ

1. ສະພາບໍລິຫານປະກອບດ້ວຍສະມາຊິກ ແຕ່ຫ້າ (5) ຄົນຂຶ້ນໄປ ລວມທັງປະທານສະພາບໍລິຫານ ແລະ ຕ້ອງເປັນສະມາຊິກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

2. ສະມາຊິກສະພາບໍລິຫານ ຖືກເລືອກຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມໃຫຍ່ສະມາຊິກ.

3. ສະມາຊິກສະພາບໍລິຫານ ມີອາຍຸການ 3 ປີ ແລະ ສາມາດຖືກເລືອກຕັ້ງໃໝ່ໄດ້ ເຖິງສອງສະໄໝຕິດຕໍ່ກັນ ຫຼັງຈາກນັ້ນຕ້ອງໄດ້ຢຸດຕິການລົງເລືອກຕັ້ງຢ່າງໜ້ອຍເປັນເວລາ 3 ປີ ກ່ອນຈະສາມາດຖືກເລືອກຕັ້ງໃຫ້ຮັບຕຳແໜ່ງອີກ.

4. ໃນກໍລະນີທີ່ສະມາຊິກສະພາບໍລິຫານຜູ້ໃດຜູ້ໜຶ່ງຫາກເສຍຊີວິດລົງ ຫລື ບໍ່ສາມາດປະຕິບັດໜ້າທີ່ໄດ້ ຫລື ລາອອກຈາກໜ້າທີ່ ໃນລະຫວ່າງສອງສະໄໝ, ກອງປະຊຸມໃຫຍ່ຜູ້ຖືຮຸ້ນ ສະພາບໍລິຫານມີສິດແຕ່ງຕັ້ງສະມາຊິກຄົນອື່ນຂຶ້ນແທນເປັນການຊົ່ວຄາວ ຈົນກວ່າຈະມີການເປີດກອງປະຊຸມໃຫຍ່ສະມາຊິກຄັ້ງຕໍ່ໄປ.

## ມາດຕາ 28. ສິດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

1. ສະພາບໍລິຫານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີສິດ ແລະ ຄວາມຮັບຜິດຊອບ

ດັ່ງນີ້:

(1). ຈັດຕັ້ງປະຕິບັດມະຕິ ຂອງກອງປະຊຸມໃຫຍ່ສະມາຊິກ;

(2). ລາຍງານ ກ່ຽວກັບກິດຈະກໍາການດໍາເນີນງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕໍ່ກອງປະຊຸມໃຫຍ່ສະມາຊິກ;

(3). ຮັບຜິດຊອບຕາມກົດໝາຍຕໍ່ຜົນເສຍຫາຍຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊຶ່ງເກີດຈາກຄວາມປະໝາດບໍ່ເອົາໃຈໃສ່ ຂອງສະພາບໍລິຫານ;

(4). ສະເໜີແບ່ງປັນກໍາໄລສຸດທິເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ຕໍ່ກອງປະຊຸມໃຫຍ່ສະມາຊິກ ເພື່ອພິຈາລະນາ;

(5). ແຕ່ງຕັ້ງປະທານສະພາບໍລິຫານ ;

(6). ແຕ່ງຕັ້ງຜູ້ປ່ຽນແທນສະມາຊິກສະພາບໍລິຫານຕໍາແໜ່ງໃດໜຶ່ງ ທີ່ຫວ່າງລົງ ໃນລະຫວ່າງສອງກອງປະຊຸມໃຫຍ່ສະມາຊິກ;

(7). ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕໍາແໜ່ງຜູ້ອໍານວຍການ;

(8). ຕັດສິນກ່ຽວກັບທິດທາງແຜນການບໍລິຫານທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕໍ່ກອງປະຊຸມໃຫຍ່ສະມາຊິກພິຈາລະນາ;

(9). ປະຕິບັດສິດ ແລະ ຄວາມຮັບຜິດຊອບອື່ນໆ ຕາມທີ່ໄດ້ກໍານົດໃນກົດໝາຍ ແລະ ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

2. ສະມາຊິກສະພາບໍລິຫານ ບໍ່ສາມາດມອບໜ້າທີ່ຮັບຜິດຊອບຂອງຕົນໃຫ້ຜູ້ອື່ນປະຕິບັດແທນ.

**ມາດຕາ 29. ກອງປະຊຸມສະພາບໍລິຫານ**

1. ສະພາບໍລິຫານ ຕ້ອງເປີດກອງປະຊຸມຄະນະສະພາບໍລິຫານເດືອນລະຄັ້ງ ຫລື ຈັດກອງປະຊຸມສະໄໝວິສາມັນຕາມຄໍາສະເໜີ ຂອງສະມາຊິກສະພາບໍລິຫານ.

2. ກອງປະຊຸມສະພາບໍລິຫານສະໄໝສາມັນ ຕ້ອງແຈ້ງລ່ວງໜ້າຢ່າງເປັນລາຍລັກອັກສອນພ້ອມດ້ວຍລະບຽບວາລະກອງປະຊຸມ ໃຫ້ສະມາຊິກສະພາບໍລິຫານຊາບຢ່າງໜ້ອຍເຈັດ (7) ວັນ ກ່ອນມື້ໄຂກອງປະຊຸມ ແລະ ແຈ້ງຢ່າງໜ້ອຍຊາວສີ່ (24) ຊົ່ວໂມງ ກ່ອນຈະໄຂກອງປະຊຸມສະໄໝວິສາມັນ ໂດຍປະທານສະພາບໍລິຫານ.

3. ກອງປະຊຸມສະພາບໍລິຫານຈະໄຂຂຶ້ນໄດ້ ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍສອງ

ສ່ວນສາມຂອງສະມາຊິກສະພາບໍລິຫານທັງໝົດ. ມະຕິກອງປະຊຸມສະພາບໍລິຫານ ຈະມີຜົນສັກສິດ ໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍ ຈາກສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີທີ່ມີຄະແນນສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນຊີ້ຂາດ. ກອງປະຊຸມສະພາບໍລິຫານແຕ່ລະຄັ້ງຕ້ອງມີບົດບັນທຶກກອງປະຊຸມ, ປະທານສະພາບໍລິຫານ ເປັນຜູ້ຮັບຜິດຊອບຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖືຂອງບົດບັນທຶກດັ່ງກ່າວ ຊຶ່ງຕ້ອງຖືກເຊັນໂດຍຜູ້ເຂົ້າຮ່ວມກອງປະຊຸມທັງໝົດ.

4. ໃນກໍລະນີ ທີ່ບໍ່ຄົບອົງປະຊຸມຕາມທີ່ກໍານົດ, ກອງປະຊຸມຕ້ອງໄດ້ຈັດຂຶ້ນອີກ ໂດຍການຮຽກໂຮມຂອງປະທານສະພາບໍລິຫານພາຍໃນສິບ (10) ວັນລັດຖະການ.

**ມາດຕາ30. ສິດ ແລະ ຄວາມຮັບຜິດຊອບຂອງປະທານສະພາບໍລິຫານ**

ສິດ ແລະ ຄວາມຮັບຜິດຊອບ ຂອງປະທານສະພາບໍລິຫານແມ່ນ ໄດ້ອະທິບາຍຢູ່ ໃນເອກະສານຊ້ອນທ້າຍ ກ.

**ມາດຕາ 31. ສິດ ແລະ ຄວາມຮັບຜິດຊອບ ຂອງສະມາຊິກສະພາບໍລິຫານ**

ສິດ ແລະ ຄວາມຮັບຜິດຊອບຂອງສະມາຊິກສະພາບໍລິຫານ ແມ່ນໄດ້ອະທິບາຍ ຢູ່ໃນເອກະສານຊ້ອນທ້າຍ ຂ.

**ມາດຕາ 32. ຄະນະກໍາມະການກວດກາ**

1. ຄະນະກໍາມະການກວດກາພາຍໃນ ຕ້ອງໄດ້ຮັບການຄັດເລືອກຈາກສະມາຊິກ ຢູ່ໃນກອງປະຊຸມໃຫຍ່. ຄະນະກໍາມະການດັ່ງກ່າວປະກອບດ້ວຍສະມາຊິກ 3 ຄົນ. ອາຍຸການດໍາລົງຕໍາແໜ່ງແມ່ນ 3 ປີ ແລະ ສະມາຊິກ ຂອງຄະນະກໍາມະການອາດຄັດເລືອກໃຫ້ດໍາລົງຕໍາແໜ່ງອີກ ແຕ່ບໍ່ເກີນສອງສະໄໝຕິດຕໍ່ກັນ ແຕ່ສາມາດຖືກຄັດເລືອກໃຫ້ມາຮັບຕໍາແໜ່ງໃໝ່ໄດ້ອີກພາຍຫຼັງ 3 ປີຜ່ານໄປ.

2. ຢ່າງໜ້ອຍສະມາຊິກໜຶ່ງຄົນ ຂອງຄະນະກໍາມະການກວດກາ ຕ້ອງມີປະສົບການດ້ານການບັນຊີ ແລະ/ຫລື ການເງິນ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບມາດຕະຖານ ແລະ ກົດລະບຽບຂອງການກວດສອບ, ການບັນຊີ ແລະ ການເງິນ.

3. ຄະນະກໍາມະການກວດກາ ມີສິດ ແລະ ຄວາມຮັບຜິດຊອບດັ່ງຕໍ່ໄປນີ້:

(1). ກວດກາການໃຊ້ຈ່າຍ ແລະ ການເຄື່ອນໄຫວ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

(2). ສອບຖາມ ແລະ ກວດກາທຸກເອກະສານ ທີ່ຕ້ອງການ ແລະ ຈໍາເປັນໃນການປະຕິບັດໜ້າທີ່ຂອງຕົນ;

(3). ໃຫ້ຄໍາແນະນໍາ ກ່ຽວກັບການຄວບຄຸມພາຍໃນ ແລະ ນະໂຍບາຍ, ຂັ້ນຕອນ ແລະ ລະບົບສໍາລັບການຈັດຕັ້ງປະຕິບັດ;

(4). ຄົ້ນຄວ້າພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງການເຄື່ອນໄຫວບັນຊີປະຈຳວັນ, ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ;

(5). ເຮັດບົດລາຍງານປະຈຳປີ ກ່ຽວກັບການກວດກາບັນຊີ ແລະ ການເຄື່ອນໄຫວອື່ນໆ ສົ່ງໃຫ້ສະພາບໍລິຫານພິຈາລະນາ ແລະ ຮັບຮອງເອົາ;

(6). ເຮັດບົດລາຍງານຕໍ່ສະພາບໍລິຫານ ແລະ ທະນາຄານແຫ່ງ ສປປ ລາວ ໃນທັນທີ ຕໍ່ການຄົ້ນພົບສິ່ງຜິດປົກກະຕິໃດໜຶ່ງ ທີ່ເຫັນວ່າມີການລະເມີດກົດໝາຍ, ຂໍ້ກຳນົດ ແລະ ລະບຽບການຕ່າງໆຂອງ ສປປ ລາວ ກໍຄືທະນາຄານແຫ່ງ ສປປ ລາວ ວາງອອກ;

(7). ສິດ ແລະ ຄວາມຮັບຜິດຊອບອື່ນໆ ທີ່ສອດຄ່ອງຕາມກົດໝາຍ ແລະ ກົດລະບຽບພາຍໃນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 33 ການປົດ ແລະ ຍົກເລີກສິດ ຂອງສະພາບໍລິຫານ ແລະ ຄະນະກຳມະການກວດກາ**

1. ຄະນະກຳມະການກວດກາ ສາມາດລົງຄະແນນສຽງທີ່ເປັນເອກະສັນກັນໃນການປົດຕຳແໜ່ງສະມາຊິກສະພາບໍລິຫານຜູ້ໃດຜູ້ໜຶ່ງ ແລະ ສະພາບໍລິຫານ ກໍສາມາດລົງຄະແນນສຽງທີ່ເປັນເອກະ ສັນກັນໃນການປົດຕຳແໜ່ງສະມາຊິກຄະນະກຳມະການກວດກາ ແລະ ຄະນະກຳມະການສິນເຊື່ອ ໃນກໍລະນີ ທີ່ມີການລະເມີດຕໍ່ກົດລະບຽບພາຍໃນ, ຂໍ້ກຳນົດ, ກົດໝາຍ ຫລື ສໍ້ໂກງ ແລະ ການກະທຳຜິດອື່ນໆ ໂດຍບຸກຄົນເຫຼົ່ານີ້.

2. ພາກສ່ວນໃດ ທີ່ປົດຕຳແໜ່ງຜູ້ບໍລິຫານ ໝາຍເຖິງສະພາບໍລິຫານ ຫລື ຄະນະກຳມະການກວດກາ ຕ້ອງໄດ້ຮຽກໂຮມກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ ຊ້າສຸດພາຍໃນສິບ (10) ວັນລັດຖະການ ພາຍຫຼັງທີ່ໄດ້ຕັດສິນໃຈປົດຕຳແໜ່ງດັ່ງກ່າວ ເພື່ອຢັ້ງຢືນການປົດຕຳແໜ່ງດັ່ງກ່າວອີກຄັ້ງຢ່າງໜ້ອຍສຽງສ່ວນໃຫຍ່ສອງສ່ວນສາມຂອງສະມາຊິກ. ພາກສ່ວນໃດເປັນຜູ້ປົດຕຳແໜ່ງຜູ້ບໍລິ ຫານຕ້ອງເປັນປະທານກອງປະຊຸມໃຫຍ່ ສະມາຊິກສະໄໝວິສາມັນ ນອກຈາກໄດ້ມອບໝາຍໃຫ້ບຸກ ຄົນອື່ນເປັນປະທານກອງປະຊຸມແທນ.

**ມາດຕາ 34. ຄະນະກຳມະການສິນເຊື່ອ**

1. ຄະນະກຳມະການສິນເຊື່ອໄດ້ຮັບເລືອກຕັ້ງໂດຍສະມາຊິກໃນກອງປະຊຸມໃຫຍ່ສະມາຊິກ;

2. ສະມາະຊິກຄະນະກຳມະການສິນເຊື່ອປະກອບດ້ວຍ 5 ຄົນ;

3. ສະມາຊິກຄະນະກຳມະການສິນເຊື່ອ ມີອາຍຸການດຳລົງຕຳແໜ່ງ 3 ປີ ແລະ ສາມາດດຳລົງຕຳແໜ່ງໄດ້ສອງສະໄໝຕິດຕໍ່ກັນ. ພາຍຫຼັງ 3 ປີຜ່ານໄປ ສະມາຊິກຄະນະດັ່ງກ່າວ ກໍສາມາດຖືກເລືອກຕັ້ງຄືນໃໝ່ໄດ້ອີກ;

4. ຄະນະກຳມະການສິນເຊື່ອອາດມອບໝາຍສິດອຳນາດຂອງຕົນທັງໝົດ ຫລື ສ່ວນໃດສ່ວນ

ໜຶ່ງໃນການອະນຸມັດເງິນກູ້ ແລະ ເພດານສິນເຊື່ອ (ວົງເງິນກູ້), ການສະເໜີ ກ່ຽວກັບການໃຊ້ເງິນຝາກເປັນຫຼັກຊັບຄໍ້າປະກັນ, ການປ່ອຍກູ້ ແລະ ການປ່ຽນຫຼັກຊັບຄໍ້າປະກັນ ໃຫ້ແກ່ຜູ້ອໍານວຍການ ຫລື ພະນັກງານສິນເຊື່ອ;

5. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດຈ້າງພະນັກງານສິນເຊື່ອ ໂດຍອີງຕາມຄວາມຈໍາເປັນ ແລະ ເຫມາະສົມ ແລະ ກໍານົດຂອບເຂດສິດ ແລະ ຄວາມຮັບຜິດຊອບ ໃນການປ່ອຍເງິນກູ້ ຂອງພວກເຂົາເຈົ້າໄວ້ໃນນະໂຍບາຍປ່ອຍກູ້ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

6. ພະນັກງານສິນເຊື່ອຕ້ອງເກັບຮັກສາບັນດາຂໍ້ມູນ ແລະ ເອກະສານໃບຄໍາຮ້ອງຂໍກູ້ເງິນ ທີ່ໄດ້ຮັບໄວ້ຢ່າງປອດໄພ ແລະ ສົ່ງບົດລາຍງານ ກ່ຽວກັບເງິນກູ້ທີ່ໄດ້ອະນຸມັດ ຫລື ບໍ່ໄດ້ຮັບອະນຸມັດແຕ່ລະສໍານວນໃຫ້ຄະນະກໍາມະການສິນເຊື່ອ. ຂໍ້ມູນດັ່ງກ່າວແມ່ນເປັນສ່ວນໜຶ່ງຂອງຂໍ້ມູນຂອງຄະນະກໍາມະການສິນເຊື່ອ;

7. ໃນກໍລະນີທີ່ ບຸກຄົນທີ່ເປັນຜູ້ອະນຸມັດການປ່ອຍເງິນກູ້ ຂອງສະຫະກອນສິນເຊື່ອ ແລະ ເງິນ

ຝາກປະຢັດ ແມ່ນບໍ່ສາມາດກູ້ຢືມເງິນ ຈາກສະຫະກອນໄດ້, ຍົກເວັ້ນພະນັກງານສິນເຊື່ອດັ່ງກ່າວເປັນສະມາຊິກສະຫະກອນ, ແຕ່ທຸກການກູ້ຢືມເງິນດັ່ງກ່າວ ຕ້ອງຢູ່ບົນພື້ນຖານ ການປະຕິບັດລະບຽບຫຼັກການຄືກັບສະມາຊິກສະຫະກອນຜູ້ອື່ນໆ ໂດຍອີງໃສ່ກົດລະບຽບພາຍໃນຂອງສະຫະກອນເປັນສໍາຄັນ;

8. ຄະນະກໍາມະການສິນເຊື່ອຕ້ອງ:

(1). ການຄົ້ນຄວ້າປຶກສາຫາລືຂອງຄະນະກໍາມະການສິນເຊື່ອ ແມ່ນຂຶ້ນກັບ ຂະໜາດຂອງທຸລະກິດ ແລະ ຄວາມຮັບຜິດຊອບ ທີ່ຖືກສະເໜີໃຫ້ຄະນະກໍາມະການສິນເຊື່ອ ທົບທວນ ຫລື ຕັດສິນໃຈ, ຢ່າງໜ້ອຍຕ້ອງຈັດກອງປະຊຸມກັນເດືອນລະຄັ້ງ. ການຕັດສິນໃຈແມ່ນບົນພື້ນຖານສຽງສ່ວນຫຼາຍຂອງຄະນະດັ່ງກ່າວ. ນອກຈາກຈະກໍານົດເພີ່ມເຕີມໄວ້ ໃນກົດລະບຽບພາຍໃນ ຫລື ລະບຽບການອື່ນໆທີ່ກ່ຽວຂ້ອງ;

(2). ໃຫ້ຄໍາປຶກສາ ແລະ ແນະນໍາແກ່ສະມາຊິກ ໃນການນໍາໃຊ້ເງິນກູ້ຢ່າງມີປະສິດທິຜົນ;

(3). ທົບທວນຄືນ ຄໍາຮ້ອງຂໍກູ້ເງິນ ແລະ ຕັດສິນໃຈ ພາຍໃຕ້ສິດຂອບເຂດຂອງຕົນ;

(4). ທົບທວນການສະເໜີຂອງສະມາຊິກ ກ່ຽວກັບການດັດແກ້ກໍານົດເວລາ ແລະ ເງື່ອນໄຂເງິນກູ້ ຖ້າຫາກວ່າ ການດັດແກ້ດັ່ງກ່າວແມ່ນສອດຄ່ອງກັບນະໂຍບາຍສິນເຊື່ອ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

(5). ທົບທວນຄືນຄໍາຮ້ອງຂໍກູ້ເງິນທີ່ຖືກປະຕິເສດໂດຍພະນັກງານສິນເຊື່ອ ພາຍຫຼັງທີ່ມີສະມາຊິກຜູ້ຂໍກູ້ໄດ້ສະເໜີໃຫ້ມີການທົບທວນຄືນ;

(6). ຄົ້ນຄວ້າພິຈາລະນາ ກ່ຽວກັບການປ່ອຍເງິນກູ້ ໃຫ້ແກ່ຜູ້ຂໍກູ້ລາຍນ້ອຍເປັນບູລິມະສິດ ຖ້າຫາກມີຂໍ້ຈໍາກັດທາງດ້ານແຫຼ່ງທຶນໃນການປ່ອຍສິນເຊື່ອ;

(7). ຕິດຕາມການຊຳລະເງິນກູ້ຄືນຢ່າງເປັນປົກກະຕິ.

**ມາດຕາ 35. ສິດ ແລະ ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ**

1. ຜູ້ອຳນວຍການມີສິດ ແລະ ຄວາມຮັບຜິດຊອບດັ່ງນີ້:

(1). ຄຸ້ມຄອງ ແລະ ຕັດສິນທຸກບັນຫາ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນຂອບເຂດ ທີ່ສະພາບໍລິຫານມອບໝາຍໃຫ້, ພ້ອມກັນນັ້ນກໍມີໜ້າທີ່ຮັບຜິດຊອບ ທຸກການເຄື່ອນໄຫວວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕໍ່ສະພາບໍລິຫານ ແລະ ກອງປະຊຸມໃຫຍ່ສະມາຊິກ;

(2). ເປັນຜູ້ຕາງໜ້າໃຫ້ແກ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນການຕິດຕໍ່ພົວພັນ ແລະ ເຊັນສັນຍາ ກັບພາກສ່ວນອື່ນໆ ຕາມການມອບສິດຂອງສະພາບໍລິຫານ;

(3). ຕົກລົງຮັບເອົາ ຫລື ປົດພະນັກງານອອກຈາກວຽກ, ປະຕິບັດນະໂຍບາຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍອື່ນໆ ຕາມການຕົກລົງຂອງສະພາບໍລິຫານ, ຍ້ອງຍໍ, ເລື່ອນຊັ້ນໃຫ້ພະນັກງານຂອງຕົນ ຫລື ປະຕິບັດມາດຕະການທາງດ້ານວິໄນຕໍ່ຜູ້ກະທຳຜິດ;

(4). ປະຕິບັດສິດ ແລະ ຄວາມຮັບຜິດຊອບອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ.

2. ຜູ້ອຳນວຍການສາມາດແຕ່ງຕັ້ງຮອງຜູ້ອຳນວຍການໜຶ່ງ ຫລື ຫຼາຍຄົນ ເປັນຜູ້ຊ່ວຍວຽກງານ ຕາມການຕົກລົງເຫັນດີຂອງສະພາບໍລິຫານ.

**ມາດຕາ 36. ການເກືອດຫ້າມ**

1. ປະທານສະພາບໍລິຫານ ບໍ່ສາມາດຄວບຕຳແໜ່ງ ເປັນຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ບໍ່ສາມາດເປັນປະທານ ສະພາບໍລິຫານ ຫລື ເປັນຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດແຫ່ງອື່ນ, ບໍ່ສາມາດເປັນປະທານສະພາບໍລິຫານ ຫລື ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກ ຫລື ຫົວໜ່ວຍທຸລະກິດອື່ນໆ ທີ່ຄ້າຍຄື.

2 ສະມາຊິກຂອງສະພາບໍລິຫານ, ຄະນະກຳມະການສິນເຊື່ອ ແລະ ຄະນະກຳມະການກວດກາ ບໍ່ສາມາດເປັນພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

3. ໃນກໍລະນີທີ່ຜູ້ບໍລິຫານຂັ້ນສູງ, ຜູ້ອຳນວຍການ ຫລື ຫົວໜ້າພາກສ່ວນ ຜູ້ໃດຜູ້ໜຶ່ງ ຫາກມີຈຸດປະສົງຢາກເຮັດວຽກຄວບກັນຢູ່ວິສະຫະກິດອື່ນໆ ທີ່ບໍ່ແມ່ນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະຕ້ອງໄດ້ຮັບການເຫັນດີຈາກສະພາບໍລິຫານເສຍກ່ອນ. ສະພາບໍລິຫານຈະອະນຸຍາດໄດ້ ກໍຕໍ່ເມື່ອເຫັນວ່າບໍ່ມີການຂັດຜົນປະໂຫຍດ ແລະ ຮັບປະກັນວ່າ ຜູ້ບໍລິຫານຂັ້ນສູງ, ຜູ້ອຳນວຍການ ຫລື ຫົວໜ້າພາກສ່ວນດັ່ງກ່າວນັ້ນ ຈະສາມາດໃຫ້ເວລາຢ່າງເຕັມສ່ວນ ແລະ ເໝາະສົມໃນການປະຕິບັດໜ້າທີ່ຂອງຕົນໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

4. ຜູ້ບໍລິຫານຂັ້ນສູງ, ຜູ້ອໍານວຍການ, ຫົວໜ້າພາກສ່ວນວິຊາການ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງບໍ່ເຄີຍຖືກລົງໂທດ ຫລື ດໍາເນີນຄະດີຮ້າຍແຮງ ໂດຍການຖືກໄລ່ອອກຈາກການຈັດຕັ້ງຂອງລັດ ຫລື ເຄີຍເຮັດວຽກດໍາລົງຕໍາແໜ່ງດັ່ງກ່າວ ຢູ່ບໍລິສັດທີ່ຖືກສັ່ງຖອນໃບອະນຸຍາດດໍາເນີນທຸລະກິດ.

## ໝວດທີ V

## ການດໍາເນີນທຸລະກິດຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

### ມາດຕາ 37. ສິດ ແລະ ຄວາມຮັບຜິດຊອບໃນການດໍາເນີນທຸລະກິດ

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີສິດ ແລະ ຄວາມຮັບຜິດຊອບດັ່ງນີ້:

(1). ປ່ອຍເງິນກູ້ເປັນເງິນກີບໃຫ້ແກ່ສະມາຊິກ;

(2). ຮັບເງິນຝາກ ແບບພັນທະ ແລະ ແບບສະໝັກໃຈຈາກສະມາຊິກ;

(3). ລະດົມທຶນໃນຮູບແບບເງິນກູ້ຢືມ ຫລື ເງິນຊ່ວຍເຫຼືອລ້າ ທັງຈາກອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຫລື ນິຕິບຸກຄົນອື່ນໆ;

(4). ເປີດບັນຊີ ແລະ ຝາກເງິນໄວ້ນໍາທະນາຄານທຸລະກິດພາຍໃນປະເທດ;

(5). ໃຫ້ການບໍລິການຊໍາລະ ຫລື ການໂອນເງິນພາຍໃນປະເທດ;

(6). ເປັນນາຍໜ້າ ສະເໜີຜະລິດຕະພັນ ປະກັນໄພໃຫ້ແກ່ສະມາຊິກ;

(7). ກໍານົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ໃນລະດັບທີ່ສາມາດກຸ້ມຕົ້ນທຶນ, ລາຍຈ່າຍບໍລິຫານ, ອາກອນ, ການກັນສໍາຮອງໜີ້ທີ່ບໍ່ເກີດດອກອອກຜົນ ແລະ ມີກໍາໄລ.

2. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕ້ອງ:

(1). ຮັບປະກັນການຖອນເງິນຝາກຄືນຂອງສະມາຊິກຕາມທີ່ກໍານົດໄວ້ໃນສັນຍາການຝາກເງິນ;

(2). ຮັກສາຄວາມລັບ ກ່ຽວກັບຖານະເງິນຝາກ, ເງິນກູ້ຂອງລູກຄ້າ (ສະມາຊິກ) ເວັ້ນເສຍແຕ່ຈະມີຄໍາສັ່ງສານ, ອົງການກວດສອບ ຫລື ໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

(3). ຈ່າຍດອກເບ້ຍເງິນຝາກໃຫ້ກັບລູກຄ້າ ຕາມອັດຕາທີ່ໄດ້ກໍານົດໄວ້ໃນສັນຍາການຝາກເງິນ;

(4). ແຈ້ງໃຫ້ລູກຄ້າຊາບ ກ່ອນຈະມີການເຊັນສັນຍາເງິນກູ້ກ່ຽວກັບມູນຄ່າ ຄ່າບໍລິການ ແລະ ດອກເບ້ຍເງິນກູ້ທີ່ຕ້ອງໄດ້ຊໍາລະຕະຫລອດໄລຍະຂອງເງິນກູ້.

**ມາດຕາ 38. ຂໍ້ເກືອດຫ້າມໃນການດຳເນີນທຸລະກິດ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ບໍ່ມີສິດດຳເນີນທຸລະກິດດັ່ງນີ້:

1. ເຮັດກິດຈະກຳເຊົ່າສິນເຊື່ອ;
2. ຊື້-ຂາຍຄຳ ຫລື ວັດຖຸມີຄ່າຕ່າງໆ, ຊື້ຂາຍວັດຖຸດິບ ແລະ ສິນຄ້າອື່ນໆ;
3. ໃຫ້ບໍລິການຊຳລະສະສາງ ຜ່ານບັນຊີແຊັກ;
4. ເຮັດການຊື້-ຂາຍລ່ວງໜ້າ ຫລື ແລກປ່ຽນເງິນຕາຕ່າງປະເທດ;
5. ອອກໜັງສືສິນເຊື່ອ, ໜັງສືຄ້ຳປະກັນ, ສະເໜີ ແລະ ດຳເນີນການຊື້-ຂາຍຮຸ້ນກູ້ ແລະ ການຄ້ຳປະກັນໃນຮູບແບບອື່ນໆ;
6. ເປັນຜູ້ສະໜອງການບໍລິການປະກັນໄພ;
7. ຊື້-ຂາຍ ຫລື ດຳເນີນທຸລະກິດ ໃນດ້ານອະສັງຫາລິມະຊັບ (ທີ່ດິນ, ອາຄານ ຫລື ສິ່ງປຸກສ້າງຕ່າງໆ) ຍົກເວັ້ນໃນກໍລະນີ ເພື່ອນຳໃຊ້ສຳລັບສະຫະກອນເອງ;
8. ຊື້ຂາຍ ຫລື ຄອບຄອງຜະລິດຕະພັນການເງິນ ທີ່ມີລັກສະນະເປັນຕາສານອະນຸພັນ;
9. ຂໍ້ຈຳກັດອື່ນໆ ຕາມການກຳນົດ ຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 39. ອັດຕາສ່ວນທາງດ້ານການເງິນ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຮັກສາບັນດາອັດຕາສ່ວນ ທາງດ້ານການເງິນຕາມຂໍ້ກຳນົດສະບັບນີ້ວາງອອກຢ່າງເຄັ່ງຂັດ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ການດຳເນີນທຸລະກິດຢ່າງຄ່ອງຕົວ, ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 40. ການລະດົມແຫຼ່ງທຶນ**

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດລະດົມແຫຼ່ງທຶນ ສະເພາະຂອງຕົນຈາກສະມາຊິກເທົ່ານັ້ນ.

2. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດລະດົມທຶນຈາກສະມາຊິກເປັນເງິນກີບເທົ່ານັ້ນ. ຖ້າມີຈຸດປະສົງຢາກລະດົມແຫຼ່ງທຶນເປັນເງິນຕາຕ່າງປະເທດ ຕ້ອງໄດ້ຮັບການເຫັນດີອະນຸຍາດຢ່າງເປັນລາຍລັກອັກສອນຈາກ ທະນາຄານແຫ່ງ ສປປ ລາວ ເສຍກ່ອນ.

3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ອາດລະດົມແຫຼ່ງທຶນ ດ້ວຍການກູ້ຢືມ, ໄດ້ຈາກການບໍລິຈາກ ຫລື ເງິນຊ່ວຍເຫຼືອລ້າ ຈາກອົງການຈັດຕັ້ງພາຍໃນ ຫລື ຕ່າງປະເທດ, ແຕ່ຕ້ອງຮູ້ໄດ້ເຖິງແຫຼ່ງທີ່ມາຂອງທຶນຊ່ວຍເຫຼືອດັ່ງກ່າວ ເພື່ອຫຼີກລ້ຽງຄວາມສ່ຽງຈາກການຟອກເງິນ.

4. ຍອດເງິນກູ້ຢືມຕ້ອງບໍ່ເກີນສາມສິບສ່ວນຮ້ອຍ (30%) ຂອງຍອດສິນເຊື່ອທັງໝົດ ຂອງສະຫະ

ກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີໃນແຕ່ລະໄລຍະ. ສຳລັບການກູ້ຢືມຈາກຕ່າງປະເທດຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ເສຍກ່ອນ.

**ມາດຕາ 41. ການປ່ອຍເງິນກູ້**

ຍອດສິນເຊື່ອທີ່ປ່ອຍໃຫ້ແກ່ສະມາຊິກ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ລາຍໜຶ່ງຕ້ອງບໍ່ເກີນສິບສ່ວນຮ້ອຍ (10%) ຂອງທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 42. ສັນຍາເງິນກູ້**

1. ເນື້ອໃນສັນຍາເງິນກູ້ ຢ່າງໜ້ອຍຕ້ອງໄດ້ກຳນົດເນື້ອໃນດັ່ງນີ້:

(1). ຊື່ເຕັມຂອງຜູ້ກູ້ຢືມ;

(2). ຈຳນວນເງິນໃຫ້ກູ້ຢືມ;

(3). ເປົ້າໝາຍ ແລະ ກຳນົດເວລາ ໃນການນຳໃຊ້ເງິນກູ້;

(4). ກຳນົດເວລາໃນການຊຳລະຄືນເງິນກູ້ ;

(5). ອັດຕາດອກເບັ້ຍເງິນກູ້;

(7). ມູນຄ່າຂອງຄ່າບໍລິການທັງໝົດທີ່ຕ້ອງຈ່າຍ ຕະຫຼອດໄລຍະເວລາຂອງເງິນກູ້ (ຖ້າມີ );

(8). ມູນຄ່າດອກເບັ້ຍທັງໝົດ ທີ່ຕ້ອງຊຳລະ ຕະຫຼອດໄລຍະເວລາຂອງເງິນກູ້;

(9). ການປັບໄໝ (ກໍລະນີຜູ້ກູ້ຢືມບໍ່ສາມາດປະຕິບັດການຊຳລະໜີ້ໄດ້ຕາມສັນຍາເງິນກູ້);

(10). ປະເພດຫຼັກຊັບຄ້ຳປະກັນ ແລະ ມູນຄ່າການຄ້ຳປະກັນ;

(11). ວິທີແກ້ໄຂຂໍ້ຂັດແຍ່ງ.

2. ສັນຍາເງິນກູ້ຢ່າງໜ້ອຍ ຕ້ອງມີລາຍເຊັນຂອງຜູ້ກູ້ຢືມ ແລະ ລາຍເຊັນຂອງຜູ້ທີ່ມີສິດອຳນາດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 43. ຂໍ້ຫ້າມໃນການປ່ອຍເງິນກູ້**

1. ຫ້າມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປ່ອຍເງິນກູ້ບ້ວງໃໝ່ ຫລື ໃຫ້ການສະໜັບສະໜູນດ້ານການເງິນແກ່ຜູ້ກູ້ຢືມ ທີ່ມີເງິນກູ້ຈັດຊັ້ນເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ, ຈົນກວ່າຜູ້ກູ້ຢືມດັ່ງກ່າວ ຈະຊຳລະຕົ້ນທຶນ ແລະ ດອກເບັ້ຍຄ້າງຊຳລະໃຫ້ຄົບຖ້ວນເສຍກ່ອນ.

2. ຫ້າມປ່ອຍເງິນກູ້ໃຫ້ແກ່ບຸກຄົນ ທີ່ບໍ່ແມ່ນສະມາຊິກສະຫະກອນຂອງຕົນ.

3. ຫ້າມຕໍ່ອາຍຸເງິນກູ້ ໂດຍບໍ່ມີເຫດຜົນພຽງພໍ, ການຕໍ່ອາຍຸເງິນກູ້ໃດໆກໍຕາມ ຕ້ອງບໍ່ແມ່ນຈຸດປະສົງ ເພື່ອຫຼີກລ້ຽງການຈັດຊັ້ນໜີ້ ເງິນກູ້ທີ່ບໍ່ເກີດດອກອອກຜົນ.

4. ດອກເບ້ຍຄ້າງຊຳລະ ຕ້ອງໄດ້ຖືກຊຳລະຢ່າງຄົບຖ້ວນ ກ່ອນຈະມີການຕໍ່ອາຍຸເງິນກູ້ບ້ວງໃໝ່, ບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ, ຫ້າມນຳເອົາດອກເບ້ຍຄ້າງຊຳລະ ໄປບວກເຂົ້າກັບຕົ້ນທຶນຂອງເງິນກູ້ບ້ວງໃໝ່ ທີ່ໄດ້ຮັບການຕໍ່ອາຍຸສັນຍາ.

**ມາດຕາ 44. ເງື່ອນໄຂການປ່ອຍເງິນກູ້ໃຫ້ແກ່ບຸກຄົນທີ່ກ່ຽວຂ້ອງ**

1. ທຸກໆເງິນກູ້ ທີ່ປ່ອຍໃຫ້ແກ່ຜູ້ບໍລິຫານ ທີ່ຖືກເລືອກຕັ້ງໃຫ້ດຳລົງຕຳແໜ່ງ, ຜູ້ຖືຮຸ້ນລາຍໃຫຍ່, ແລະ ບຸກຄົນທີ່ມີຜົນປະໂຫຍດ ທາງດ້ານທຸລະກິດກັບຜູ້ບໍລິຫານ ຕ້ອງໄດ້ຮັບການອະນຸມັດ ໂດຍການລົງຄະແນນສຽງສອງສ່ວນສາມ ຂອງສະມາຊິກໃນຄະນະກຳມະການສິນເຊື່ອ, ສ່ວນເງິນກູ້ໃຫ້ບຸກຄົນທີ່ມີສາຍພົວພັນຜົວເມຍ, ຍາດສາຍຕັ້ງທີ່ກ່ຽວຂ້ອງ ຫລື ໃກ້ຊິດຂອງຜູ້ບໍລິຫານນັ້ນ ແມ່ນຕ້ອງມີຄະແນນສຽງເຫັນດີສອງສ່ວນສາມ ຂອງສະພາບໍລິຫານ.

2. ເງິນກູ້ທີ່ປ່ອຍໃຫ້ແກ່ພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຕາມລະບຽບຫລັກການປົກກະຕິ ຄືກັບເງິນປ່ອຍກູ້ໃຫ້ແກ່ລູກຄ້າ (ສະມາຊິກ) ທົ່ວໄປ.

3. ຍອດລວມເງິນກູ້ທີ່ປ່ອຍໃຫ້ແກ່ ພາກສ່ວນທີ່ມີສ່ວນກ່ຽວຂ້ອງລາຍໜຶ່ງໆ ຕ້ອງບໍ່ເກີນຫ້າສ່ວນຮ້ອຍ ( 5%) ຂອງທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

3. ຍອດເຫຼືອເງິນກູ້ທັງໝົດ ຂອງພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຕ້ອງບໍ່ເກີນຊາວຫ້າສ່ວນຮ້ອຍ (25%) ຂອງທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 45. ການຈັດປະເພດເງິນກູ້ ແລະ ການສ້າງຄັງແຮເພື່ອໜີ້ສູນ**

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງມີການຕິດຕາມເງິນກູ້ຢ່າງເປັນປົກກະຕິ ຢ່າງໜ້ອຍທຸກໆໄຕມາດ ຊຶ່ງຖ້າຫາກເກີດມີເງິນກູ້ຄ້າງຊຳລະ ທີ່ເກີນກຳນົດສັນຍາຕາມ ທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້ ເງິນກູ້ດັ່ງກ່າວຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດເງິນກູ້ທີ່ບໍ່ອອກດອກອອກຜົນ ແລະ ສ້າງຄັງແຮເພື່ອໜີ້ສູນ:

(1). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ຫລື ດອກເບ້ຍ) ແຕ່ 31-90 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ຕ່ຳກວ່າມາດຕະຖານ ແລະ ຕ້ອງໄດ້ສ້າງຄັງແຮເພື່ອໜີ້ສູນຊາວຫ້າສ່ວນຮ້ອຍ (25%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.

(2). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ຫລື ດອກເບ້ຍ) ແຕ່ 91-180 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ສົງໃສ ແລະ ຕ້ອງໄດ້ສ້າງຄັງແຮເພື່ອໜີ້ສູນຫ້າສິບສ່ວນຮ້ອຍ (50%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.

(3). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ຫລື ດອກເບ້ຍ) ທີ່ເກີນ 180 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ສູນ ແລະ ຕ້ອງໄດ້ສ້າງຄັງແຮເພື່ອໜີ້ສູນຮ້ອຍສ່ວນຮ້ອຍ (100%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.

2. ຍອດເງິນກູ້ທີ່ໄດ້ຖືກຈັດເຂົ້າໃນປະເພດ ໜີ້ທີ່ບໍ່ອອກດອກອອກຜົນ ຕ້ອງບໍ່ເກີນຫ້າສ່ວນຮ້ອຍ (5%) ຂອງຍອດເຫຼືອເງິນກູ້ທັງໝົດ. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສ້າງຄັງແຮເພື່ອໜີ້ສູນທົ່ວໄປມູນຄ່າໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າທັງໝົດ ຂອງຍອດເຫລືອເງິນກູ້ປົກກະຕິ.

3. ທະນາຄານແຫ່ງ ສປປ ລາວ ສາມາດສັ່ງໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສ້າງຄັງແຮເພື່ອໜີ້ສູນເພີ້ມ, ຖ້າຫາກເຫັນວ່າ ການສ້າງຄັງແຮເພື່ອໜີ້ສູນ ທີ່ມີຢູ່ໃນປະຈຸບັນ ຍັງບໍ່ທັນພຽງພໍພາຍຫຼັງທີ່ໄດ້ທົບທວນຄວາມສ່ຽງ ແລະ ຄຸນນະພາບ ໃນການບໍລິຫານໂດຍລວມ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

4. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງເກັບຮັກສາທຸກເອກະສານ ທີ່ກ່ຽວພັນກັບເງິນກູ້ທີ່ບໍ່ອອກດອກອອກຜົນ ເພື່ອໃຊ້ເປັນບ່ອນອີງໃນການກວດກາຄວາມຖືກຕ້ອງ ແລະ ຄວາມສົມບູນຂອງການສ້າງຄັງແຮເພື່ອໜີ້ສູນ ໃນບັນທຶກການບັນຊີ ແລະ ສຳລັບໃຊ້ເປັນຫຼັກຖານໃນເວລາເກັບກູ້ໜີ້ ຫລື ເວລາມີການນຳໃຊ້ຂັ້ນຕອນທາງກົດໝາຍຕໍ່ຜູ້ກູ້ຢືມດັ່ງກ່າວ.

5. ທຸກເງິນກູ້ບ້ວງໃໝ່ ເພື່ອເອົາໄປຊຳລະເງິນກູ້ຄ້າງຊຳລະ ຫລື ເງິນກູ້ທີ່ຜ່ານການປັບປຸງໂຄງສ້າງມາແລ້ວ, ເງິນກູ້ທີ່ຖືກຕໍ່ອາຍຸ ຫລື ຖືກປັບປຸງ ເນື່ອງຈາກຄວາມອ່ອນແອ ດ້ານຖານະການເງິນຂອງຜູ້ກູ້ຢືມ ຫລື ຍ້ອນຜູ້ກູ້ຢືມບໍ່ສາມາດຊຳລະເງິນກູ້, ເງິນກູ້ບ້ວງໃໝ່ດັ່ງກ່າວ ຈະຖືກຈັດປະເພດເຂົ້າໃນບັນຊີເງິນກູ້ ທີ່ບໍ່ສູງກວ່າປະເພດໜີ້ຕ່ຳກວ່າມາດຕະຖານ. ຖ້າຫາກເງິນກູ້ທີ່ຜ່ານການປັບປຸງໂຄງສ້າງ ຫລື ຜ່ານການດັດແກ້ເປັນເງິນກູ້ທີ່ອອກດອກອອກຜົນ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ກໍສາມາດຄິດໄລ່ດອກເບັ້ຍສະສົມໄດ້.

### ມາດຕາ 46. ການຢຸດຄິດໄລ່ດອກເບັ້ຍຄ້າງຮັບ ຂອງເງິນກູ້ທີ່ໄດ້ຖືກຈັດຢູ່ໃນເງິນກູ້ທີ່ບໍ່ເກີດດອກອອກຜົນ

ນອກເໜືອຈາກທີ່ໄດ້ກ່າວໄວ້ໃນມາດຕາ 45, ຂໍ້ 5 ແລ້ວ ຖ້າສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະນຳໃຊ້ພື້ນຖານການບັນຊີແບບຄິດໄລ່ສະສົມຄ້າງຮັບ ຕ້ອງຢຸດຕິຄິດໄລ່ດອກເບັ້ຍເງິນກູ້ ທີ່ໄດ້ຖືກຈັດຢູ່ໃນເງິນກູ້ທີ່ບໍ່ເກີດດອກອອກຜົນດັ່ງກ່າວ ເຂົ້າເປັນລາຍຮັບ ແລະ ດອກເບັ້ຍຄ້າງຮັບຂອງເງິນກູ້ດັ່ງກ່າວ ທີ່ໄດ້ເຄີຍຄິດໄລ່ ແລະ ຈົດເຂົ້າບັນຊີລາຍຮັບໃນເມື່ອກ່ອນ ແຕ່ຕົວຈິງບໍ່ໄດ້ຮັບນັ້ນ ຕ້ອງຈົດອອກຈາກລາຍຮັບເຊັ່ນດຽວກັນ.

### ມາດຕາ 47. ການຊໍາລະຄືນເງິນກູ້ ທີ່ບໍ່ເກີດດອກອອກຜົນ

ເງິນກູ້ທີ່ໄດ້ຖືກຈັດໄວ້ຢູ່ໃນ ເງິນກູ້ທີ່ບໍ່ເກີດດອກອອກຜົນ, ອັນເນື່ອງມາຈາກການຄ້າງຊໍາລະຕົ້ນທຶນ ຫລື ທັງຕົ້ນທຶນ ແລະ ດອກເບັ້ຍເກີນ 180 ວັນ, ຖ້າຫາກມີການຊໍາລະໜີ້ດັ່ງກ່າວຄືນ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງນໍາເອົາຈໍານວນເງິນທີ່ມາຊໍາລະຄືນນັ້ນ ໄປຫັກດອກເບັ້ຍເສຍກ່ອນ, ສ່ວນທີ່ເຫຼືອ ຈຶ່ງນໍາເອົາໄປຫັກກັບຕົ້ນທຶນຄ້າງຊໍາລະເງິນກູ້ດັ່ງກ່າວ.

### ມາດຕາ 48. ການລ້າງໜີ້ທວງຍາກ

1. ທຸກເງິນກູ້ທີ່ຖືກຈັດຢູ່ໃນບັນຊີໜີ້ທີ່ບໍ່ເກີດດອກອອກຜົນທີ່ເກີນ 180 ວັນ ຕ້ອງໄດ້ຖືກລ້າງອອກຈາກໃບສະຫຼຸບຊັບສິນບັດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊ້າສຸດບໍ່ໃຫ້ກາຍໄຕມາດຖັດມາ ພາຍຫຼັງທີ່ໄດ້ລາຍງານວ່າເປັນໜີ້ສູນແລ້ວ. ການລ້າງໜີ້ດັ່ງກ່າວ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຍັງຕ້ອງໄດ້ເອົາໃຈໃສ່ ສືບຕໍ່ຕິດຕາມ ເພື່ອເກັບກູ້ໜີ້ສິນດັ່ງກ່າວຄືນ.

2. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງບັນທຶກການລ້າງໜີ້ສູນທັງໝົດ ແລະ ການເກັບກູ້ໜີ້ ຫລື ການຊໍາລະຫນີ້ຄືນ ພາຍຫຼັງໄດ້ມີການລ້າງໜີ້ສູນເງິນກູ້ດັ່ງກ່າວ ແລະ ຕ້ອງໄດ້ເອົາໜີ້ທີ່ເກັບກູ້ຄືນໄດ້ດັ່ງກ່າວບັນທຶກເຂົ້າໃນບັນຊີຄືນ.

### ມາດຕາ 49 . ອັດຕາສ່ວນຄວາມພຽງພໍຂອງທຶນ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດ ຕ້ອງໄດ້ປະຕິບັດອັດຕາສ່ວນທຶນ ຕໍ່ຊັບສິນ ທີ່ໄດ້ວາງນໍ້າໜັກຄວາມສ່ຽງ ບໍ່ໃຫ້ຫຼຸດສິບສອງສ່ວນຮ້ອຍ (12%) ຫລື ຕາມການປ່ຽນແປງຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

### ມາດຕາ 50. ອັດຕາສ່ວນສະພາບຄ່ອງ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຮັກສາອັດຕາສ່ວນສະພາບຄ່ອງຂອງຕົນດັ່ງລຸ່ມນີ້:

1. ອັດຕາສ່ວນເງິນສົດໃນຄັງຢ່າງໜ້ອຍສີ່ສ່ວນຮ້ອຍ (4%) ຊຶ່ງມີວິທີການຄິດໄລ່ດັ່ງຕໍ່ໄປນີ້: ເງິນສົດທັງໝົດ (ເບື້ອງຊັບສິນ) ÷ ເງິນຝາກທັງໝົດ (ເບື້ອງໜີ້ສິນ);
2. ອັດຕາສ່ວນສະພາບຄ່ອງທັງໝົດຢ່າງໜ້ອຍຊາວສ່ວນຮ້ອຍ (20%) ຊຶ່ງມີວິທີການຄິດໄລ່ດັ່ງຕໍ່ໄປນີ້: (ເງິນສົດທັງໝົດ + ເງິນຝາກຢູ່ທະນາຄານ ຫລື ສະຖາບັນການເງິນອື່ນ) ÷ ໜີ້ສິນທັງໝົດ.

### ມາດຕາ 51. ການລົງທຶນ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດລົງທຶນໃນຫົວໜ່ວຍທຸລະກິດອື່ນໄດ້ຕາມການເຫັນດີອະນຸມັດຢ່າງເປັນລາຍລັກອັກສອນຈາກ ທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ.

# ໝວດທີ VI

## ລາຍຮັບ, ລາຍຈ່າຍ, ກຳໄລ ແລະ ການຂາດທຶນ

### ມາດຕາ 52. ລາຍຮັບ ແລະ ລາຍຈ່າຍ

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດມີດັ່ງນີ້:
   (1). ລາຍຮັບຈາກດອກເບັ້ຍ;
   (2). ລາຍຮັບຈາກຄ່າບໍລິການໃນການບໍລິການ;
   (3). ລາຍຮັບອື່ນໆ.

2. ລາຍຈ່າຍຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດມີດັ່ງນີ້:
   (1). ລາຍຈ່າຍດອກເບັ້ຍ;
   (2). ລາຍຈ່າຍໃນການບໍລິຫານທຸລະກິດ;
   (3). ລາຍຈ່າຍການສ້າງຄັງແຮເພື່ອໜີ້ສູນ;
   (4). ລາຍຈ່າຍຄ່າເຊື່ອມມູນຄ່າຊັບສິນ ແລະ ຫັກຄ່າຫຼຸ້ຍຫ້ຽນຊັບສິນບັດຄົງທີ່;
   (5). ລາຍຈ່າຍອື່ນໆ.

### ມາດຕາ 53. ກຳໄລ

ກຳໄລກ່ອນອາກອນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນສ່ວນຜິດດ່ຽງລະຫວ່າງລາຍຮັບ ແລະ ລາຍຈ່າຍ. ກຳໄລສຸດທິ ແມ່ນກຳໄລຫຼັງຈາກທີ່ໄດ້ເສຍອາກອນແລ້ວ. ການຈ່າຍເງິນປັນຜົນໃຫ້ແກ່ບັນດາສະມາຊິກ ອາດມີຂຶ້ນໄດ້ ກໍຕໍ່ເມື່ອໄດ້ບັນລຸອັດຕາສ່ວນຄວາມພຽງພໍຂອງທຶນ, ສ້າງເງິນແຮເພື່ອໜີ້ສູນ, ສ້າງຄັງສະສົມຕາມລະບຽບການຕາມ ທີ່ໄດ້ກຳນົດໄວ້ໃນຂໍ້ກຳນົດສະບັບນີ້ ຫລື ສະບັບດັດແກ້ອື່ນໆຂອງ ທະນາຄານແຫ່ງ ສປປ ລາວ ວາງອອກ.

### ມາດຕາ 54. ຄັງສະສົມຕາມລະບຽບການ

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສ້າງຄັງສະສົມ ຕາມລະບຽບການ ເພື່ອທົດແທນການຂາດທຶນ ຈາກການເຄື່ອນໄຫວທຸລະກິດ.

2. ຄັງສະສົມຕາມລະບຽບການ ຕ້ອງສະສົມໂດຍໂອນໄປໄວ້ຄັງສະສົມຈຳນວນຢ່າງໜ້ອຍຫ້າສ່ວນຮ້ອຍ (5%) ຂອງກຳໄລສຸດທິໃນແຕ່ລະປີ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ຈົນກວ່າຍອດລວມຂອງຄັງສະສົມຕາມລະບຽບການບັນລຸໄດ້ຊາວສ່ວນຮ້ອຍ (20%) ຂອງທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ຫຼັງຈາກນັ້ນຄັງສະສົມຕາມລະບຽບການ ຕ້ອງຖືກຮັກສາໄວ້ໃຫ້ຢູ່ໃນລະ ດັບຊາວສ່ວນຮ້ອຍ ( 20%) ຂອງທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

### ມາດຕາ 55. ການຂາດທຶນ ແລະ ການຟື້ນຟູ

ໃນກໍລະນີດຳເນີນທຸລະກິດຂາດທຶນ ທີ່ບໍ່ແມ່ນຍ້ອນສາເຫດ ມາຈາກເງິນກູ້ໂດຍລວມ ຫລື

ຍ້ອນສາຍເຫດມາຈາກເງິນກູ້ໂດຍລວມ ກໍບໍ່ສາມາດນໍາໃຊ້ເງິນຢູ່ໃນຄັງແຮປະຈຸບັນ ຫລື ຄັງແຮເພື່ອໜີ້ສູນອັນໃໝ່. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງນໍາສະເໜີຂໍອະນຸມັດຈາກສະພາບໍລິຫານ ເພື່ອຂໍນໍາໃຊ້ຄັງສະສົມຕາມລະບຽບການຕາມການ.

**ມາດຕາ 56. ການປະຕິບັດພັນທະໃນການເສຍອາກອນ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງປະຕິບັດການເສຍພັນທະ ອາກອນໃຫ້ລັດຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ.

## ໝວດທີ VII

## ການກວດສອບ, ການບັນຊີ ແລະ ການລາຍງານ

**ມາດຕາ 57. ການກວດກາພາຍໃນ ແລະ ການກວດສອບພາຍນອກ**

1. ທຸກການໃຊ້ຈ່າຍ ແລະ ເຄື່ອນໄຫວທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງມີການກວດກາຢ່າງປົກກະຕິ. ການກວດກາດັ່ງກ່າວມີສອງປະເພດຄື: ກວດກາພາຍໃນ ແລະ ກວດສອບຈາກພາຍນອກ.

2. ການກວດກາພາຍໃນ ແມ່ນການກວດກາ ໂດຍຜູ້ກວດກາ ຫລື ຄະນະກວດກາພາຍໃນທີ່ຖືກແຕ່ງຕັ້ງໂດຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

3. ການກວດສອບພາຍນອກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະກອບດ້ວຍການກວດສອບບັນຊີຈາກບໍລິສັດກວດສອບບັນຊີ ພາຍນອກ ແລະ ການກວດກາຈາກທະນາຄານແຫ່ງ ສປປ ລາວ. ບໍລິສັດກວດສອບບັນຊີພາຍນອກ ແລະ ຄ່າໃຊ້ຈ່າຍໃນການກວດສອບບັນຊີດັ່ງກ່າວຖືກຮັບຮອງ ໂດຍກອງປະຊຸມໃຫຍ່ສະມາຊິກສະໄໝສາມັນ ຕາມການສະເໜີ ຂອງສະພາບໍລິຫານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ການກວດສອບບັນຊີຈາກ ບໍລິສັດກວດສອບບັນຊີພາຍນອກ ຕໍ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນດໍາເນີນປີລະຄັ້ງ ແລະ ພາຍຫຼັງສໍາເລັດການກວດສອບບັນຊີດັ່ງກ່າວແລ້ວ ບໍລິສັດກວດສອບບັນຊີພາຍນອກ ຕ້ອງເຮັດບົດສະຫຼຸບຜົນຂອງການກວດສອບໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ວ່າຈ້າງໃຫ້ກວດສອບບັນຊີ ແລະ ທະນາຄານແຫ່ງ ສປປ ລາວ ຊາບ. ການກວດກາຈາກທະນາຄານແຫ່ງ ສປປ ລາວ ດໍາເນີນປີລະຄັ້ງ ຫລື ກວດກາຕາມກໍລະນີທີ່ເຫັນວ່າມີຄວາມຈໍາເປັນ.

4. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ປ່ຽນຄະນະກວດສອບບັນຊີພາຍນອກຢ່າງໜ້ອຍທຸກໆ 3 ປີ. ທະນາຄານແຫ່ງ ສປປ ລາວ ອາດຍົກເວັ້ນເງື່ອນໄຂນີ້ ຖ້າຫາກໄດ້ຮັບການແຈ້ງເປັນລາຍລັກອັກສອນ ຈາກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດວ່າມີ ຄວາມຫຍຸ້ງຍາກໃນການ

ຊອກຫາ ຄະນະກວດສອບບັນຊີພາຍນອກ ທີ່ມີຄຸນວຸດທິໃນຂົງເຂດທີ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕັ້ງຢູ່.

5. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ບໍ່ສາມາດຈ້າງເອົາບໍລິສັດກວດສອບບັນຊີພາຍນອກທີ່ຢູ່ໃນກໍລະນີ ດັ່ງນີ້:

(1). ມີສາຍພົວພັນກັບຜູ້ບໍລິຫານ ຫລື ພະນັກງານຂອງສະຫະກອນສິນເຊື່ອ ແລະ ເງິນຝາກ ປະຢັດ;

(2). ໃຫ້ການບໍລິການດ້ານການປຶກສາກ່ຽວກັບຂົງເຂດການປ່ອຍກູ້, ການບັນຊີ, ການເງິນ, ການບໍລິຫານ ຫລື ການດຳເນີນທຸລະກິດອື່ນໆ ໃນໄລຍະ 5 ປີ ຜ່ານມາ;

(3). ເປັນສະມາຊິກຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

## ມາດຕາ 58. ດ້ານການບັນຊີ ແລະ ການລາຍງານ

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກທະນາຄານແຫ່ງ ສປປ ລາວ ຕ້ອງຈັດຕັ້ງ, ນຳໃຊ້ລະບົບບັນຊີ ແລະ ສາລະບານບັນຊີ, ພ້ອມທັງຄູ່ມືບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

2. ໃນ 3 ປີເບື້ອງຕົ້ນຂອງການດຳເນີນທຸລະກິດ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດໃຊ້ການບັນຊີແບບເງິນສົດ ຫລື ຫຼັກການສະສົມຄ້າງຮັບ. ຫຼັງຈາກນັ້ນຕ້ອງໃຊ້ການບັນຊີແບບຄິດໄລ່ສະສົມເທົ່ານັ້ນ.

3. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສະຫຼຸບ ແລະ ຈັດສົ່ງບົດລາຍງານດັ່ງຕໍ່ໄປນີ້ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ປະຈຳໄຕມາດ ແລະ ປະຈຳປີ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດມາ ຫລື ສອດຄ່ອງຕາມກຳນົດເວລາ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

(1). ຂໍ້ມູນກ່ຽວກັບຊັບສິນ-ໜີ້ສິນ (ໃບສະຫຼຸບຊັບສົມບັດ);

(2). ຂໍ້ມູນກ່ຽວກັບກຳໄລ-ຂາດທຶນ (ໃບລາຍງານຜົນໄດ້ຮັບ);

(3). ຂໍ້ມູນກ່ຽວກັບເງິນກູ້ / ເງິນຝາກ ແຍກເປັນແຕ່ລະປະເພດ (ໃບລາຍງານຖານະເງິນກູ້ / ເງິນຝາກ);

(4). ຂໍ້ມູນໜີ້ ກ່ຽວກັບເງິນກູ້ທີ່ບໍ່ອອກດອກຜົນ ແລະ ການສ້າງຄັງແຮ ເພື່ອໜີ້ສູນ (ໃບລາຍງານການຈັດຊັ້ນໜີ້);

(5). ອື່ນໆຕາມການກຳນົດ ຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

4. ພາຍໃນ 90 ວັນຫຼັງສິ້ນສຸດປີການບັນຊີ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຈັດ

ສິ່ງບົດລາຍງານດັ່ງລຸ່ມນີ້ໃຫ້ ທະນາຄານແຫ່ງ ສປປ ລາວ.

(1). ບົດລາຍງານການເຄື່ອນໄຫວປະຈຳປີ ຂອງປີການບັນຊີປີຜ່ານມາ;

(2). ບົດລາຍງານຖານະການເງິນ ທີ່ໄດ້ຮັບການກວດສອບແລ້ວ ຂອງປີການບັນຊີຜ່ານມາ;

(3). ແຜນງົບປະມານສຳລັບສົກປີການບັນຊີປີໃໝ່;

(4). ສະຖິຕິພະນັກງານ;

(5). ໂຄງຮ່າງການຈັດຕັ້ງ;

(6). ທີ່ຕັ້ງ ແລະ ຈຳນວນສາຂາ.

5. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງລາຍງານທະນາຄານແຫ່ງ ສປປ ລາວ ຢ່າງທັນທີ ຕໍ່ກັບສະພາບ ຫລື ເຫດການໃດໜຶ່ງ ທີ່ອາດສົ່ງຜົນກະທົບຮ້າຍແຮງ ຕໍ່ການເຄື່ອນໄຫວທຸລະກິດ ຫລື ຄວາມໝັ້ນຄົງ ຂອງສະຫະກອນ ຫລື ສ້າງຜົນເສຍຫາຍຕໍ່ສັງຄົມ.

### ມາດຕາ 59. ການເກັບຮັກສາເອກະສານບັນຊີ

ທຸກເອກະສານບັນຊີ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຖືກເກັບຮັກສາໄວ້ຢ່າງປອດໄພ ຢູ່ສຳນັກງານເປັນໄລຍະເວລາສິບ (10) ປີ.

### ມາດຕາ 60. ການເປີດເຜີຍຖານະການເງິນ

ພາຍໃນ 90 ວັນ ຫລື ຢ່າງຊ້າບໍ່ໃຫ້ເກີນໄຕມາດທີໜຶ່ງ ຂອງວັນທີ 31 ມີນາ ຂອງປີຖັດມາ ພາຍຫຼັງປິດປີການບັນຊີປະຈຳປີ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງພິມຖານະການເງິນຂອງຕົນຕາມແບບຟອມທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ເຜີຍແຜ່ໃຫ້ແກ່ບັນດາສະມາຊິກ ໂດຍຜ່ານສື່ມວນຊົນຕ່າງໆ ແລະ ຕິດເຜີຍແຜ່ຢູ່ສຳນັກງານໃຫຍ່ຂອງ ສະຫະກອນເອງຢ່າງໜ້ອຍເປັນເວລາ ຫົກ (6) ເດືອນຕິດຕໍ່ກັນ.

## ໝວດທີ VIII
## ການຊຳລະສະສາງບັນຊີ ແລະ ການປິດກິດຈະການ

### ມາດຕາ 61. ຂັ້ນຕອນການຊຳລະສະສາງບັນຊີແບບສະໝັກໃຈ

1. ການຊຳລະສະສາງບັນຊີໂດຍສະໝັກໃຈ ຈະເກີດຂຶ້ນໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຢ່າງໜ້ອຍສອງສ່ວນສາມຂອງສະມາຊິກ ແລະ ບົນພື້ນຖານການເຫັນດີອະນຸມັດ ຈາກທະນາຄານແຫ່ງ ສປປ ລາວ ແລະ ກໍຕໍ່ເມື່ອ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີຄວາມສາມາດໃນການຊຳລະໜີ້ສິນທັງໝົດຄືນໃຫ້ແກ່ບັນດາເຈົ້າໜີ້ ແລະ ຜູ້ຝາກເງິນຢ່າງຄົບຖ້ວນ.

2. ຂັ້ນຕອນການຊຳລະສະສາງ ບັນຊີໂດຍສະໝັກໃຈ ຕ້ອງໄດ້ປະຕິບັດດັ່ງຕໍ່ໄປນີ້:

(1). ເປີດກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ ເພື່ອນຳສະເໜີ ແລະ ລົງຄະແນນສຽງ;

(2). ພາຍຫຼັງໄດ້ຮັບຄະແນນສຽງສ່ວນໃຫຍ່ຈາກສະມາຊິກ ຕາມທີ່ໄດ້ກ່າວໄວ້ໃນຂໍ້ 1 ຂ້າງເທິງນີ້ ຕ້ອງໄດ້ແຕ່ງຕັ້ງຄະນະກຳມະການ ຫລື ຕົວແທນເຮັດການຊຳລະສະສາງບັນຊີ;

(3). ຄະນະກຳມະການ ຫລື ຕົວແທນດັ່ງກ່າວ ຕ້ອງສ້າງແຜນການຊຳລະສະສາງບັນຊີ ໃຫ້ແກ່ ບັນດາເຈົ້າໜີ້ ແລະ ຜູ້ຝາກເງິນ ພາຍໃນຂອບເຂດກຳນົດເວລາ 12 ເດືອນ;

(4). ນຳສະເໜີແຜນການຊຳລະສະສາງບັນຊີດັ່ງກ່າວ ຢ່າງເປັນລາຍລັກອັກສອນໃຫ້ແກ່ ທະນາຄານແຫ່ງ ສປປ ລາວ, ພ້ອມດ້ວຍບັນດາມະຕິຕົກລົງຂອງກອງປະຊຸມໃຫຍ່ສະມາຊິກສະໄໝວິສາມັນ, ເຫດຜົນໃນການຊຳລະສະສາງບັນຊີ, ບັນດາບົດລາຍງານດ້ານການເງິນ, ບັນດາລາຍຊື່ຄະນະກຳມະການ ຫລື ຕົວແທນເຮັດການຊຳລະສະສາງບັນຊີ;

(5). ການຊຳລະສະສາງບັນຊີແບບສະໝັກໃຈ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາສິບສອງ (12) ເດືອນ ນັບແຕ່ວັນທີທີ່ໄດ້ຮັບອະນຸມັດຈາກ ທະນາຄານແຫ່ງ ສປປ ລາວ ເປັນຕົ້ນໄປ.

### ມາດຕາ 62. ການທົບທວນຄືນຂອງທະນາຄານແຫ່ງ ສປປ ລາວ

1. ພາຍຫຼັງທີ່ໄດ້ຮັບການສະເໜີຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 61 ແລ້ວ ທະນາຄານແຫ່ງ ສປປ ລາວ ຈະທົບທວນຄືນບັນດາເອກະສານດັ່ງກ່າວ. ທະນາຄານແຫ່ງ ສປປ ລາວ ອາດຈະສະເໜີໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດັດແກ້ແຜນການຊຳລະສະສາງບັນຊີຄືນໃໝ່ ຫລື ຮຽກຮ້ອງເອກະສານ ແລະ ຂໍ້ມູນຕື່ມອີກ. ແຕ່ຖ້າຫາກເຫັນວ່າຖືກຕ້ອງຄົບຖ້ວນແລ້ວຈະແຈ້ງຕອບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບ (30) ວັນ ນັບແຕ່ມື້ທີ່ໄດ້ຮັບເອກະສານດັ່ງກ່າວເປັນຕົ້ນໄປ.
2. ພາຍຫຼັງທີ່ໄດ້ຮັບອະນຸມັດຈາກທະນາຄານແຫ່ງ ສປປ ລາວ ແລ້ວ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ຕິດປະກາດ ແລະ ພິມເຜີຍແຜ່ຜົນການຕັດສິນໃຈດັ່ງກ່າວ ລົງໃນໜັງສືພິມທ້ອງຖິ່ນທີ່ມີ ຄົນອ່ານຢ່າງກວ້າງຂວາງເປັນເວລາ 8 ອາທິດຕໍ່ເນື່ອງກັນ.

### ມາດຕາ 63. ເນື້ອໃນແຈ້ງການກ່ຽວກັບການເຮັດຊຳລະສະສາງບັນຊີແບບສະໝັກໃຈ

ເນື້ອໃນຂອງແຈ້ງການຕ້ອງໄດ້ລະບຸຄື :

1. ຊື່ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
2. ຈຸດປະສົງໃນການເຮັດການຊຳລະສະສາງ;
3. ໄລຍະເວລາເຮັດການຊຳລະສະສາງ ແລະ ວັນທີ, ເດືອນ, ປີ ທີ່ສະຫະກອນຈະປິດກິດຈະການຂອງຕົນຢ່າງເປັນທາງການ;
4. ແຈ້ງກ່ຽວກັບຂັ້ນຕອນໃຫ້ ຜູ້ຝາກເງິນ ມາທວງເອົາເງິນຄືນ ແລະ ເຈົ້າໜີ້ມາຮັບການຊຳລະຈາກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
5. ກຳນົດເວລາຊັດເຈນທີ່ຜູ້ຝາກເງິນ ແລະ ເຈົ້າໜີ້ສາມາດມາຖອນເງິນໄດ້.

**ມາດຕາ 64. ໄລຍະເຮັດການຊຳລະສະສາງບັນຊີແບບສະໝັກໃຈ**

1. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດ ທີ່ກຳລັງດຳເນີນຂັ້ນຕອນການຊຳລະສະສາງ ຕ້ອງເປີດສຳນັກງານຂອງຕົນ ຈົນກວ່າການຊຳລະສະສາງດັ່ງກ່າວ ສຳເລັດຕາມທີ່ໄດ້ກຳນົດໄວ້.

2. ພາຍຫຼັງໄດ້ຮັບອະນຸມັດເຮັດການຊຳລະສະສາງບັນຊີແບບສະໝັກໃຈ ຈາກທະນາຄານ ແຫ່ງ ສປປ ລາວ ແລ້ວ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຢຸດຕິການຮັບເງິນຝາກແບບສະໝັກໃຈ, ຢຸດຕິການປ່ອຍເງິນກູ້ ແລະ ຢຸດຕິການເຄື່ອນໄຫວທຸລະກິດທັງໝົດ. ສຳລັບການເກັບກູ້ໜີ້ (ເງິນກູ້ ແລະ ດອກເບ້ຍ), ການຊຳລະສະສາງໃຫ້ແກ່ບັນດາເຈົ້າໜີ້ ແລະ ຜູ້ຝາກເງິນແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ.

**ມາດຕາ 65. ຂັ້ນຕອນສຸດທ້າຍໃນການເຮັດຊຳລະສະສາງບັນຊີແບບສະໝັກໃຈ**

1. ຖ້າຫາກຍັງມີສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ ຍັງຕົກຄ້າງ ຫລື ບໍ່ທັນໄດ້ມາທວງເອົາເງິນ ຫລື ໜີ້ສິນຂອງເຂົາເຈົ້າຄືນ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ເຮັດບັນຊີຕິດຕາມ ຊຶ່ງຕ້ອງໄດ້ລະບຸແຈ້ງ ກ່ຽວກັບລາຍຊື່ສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ດັ່ງກ່າວ ພ້ອມທັງຈຳນວນເງິນ, ດອກເບ້ຍ ແລະ ໜີ້ສິນ ໄວ້ຢ່າງລະອຽດຄົບຖ້ວນ ແລະ ຕ້ອງໄດ້ຮັບການຢັ້ງຢືນ ແລະ ເຊັນໂດຍປະທານສະພາບໍລິຫານ ແລ້ວລາຍງານໃຫ້ ທະນາຄານແຫ່ງ ສປປ ລາວ ພາຍໃນກຳນົດເວລາສິບ (10) ວັນລັດຖະການ ນັບແຕ່ວັນທີ່ປິດກິດຈະການຢ່າງເປັນທາງການ.

2. ທະນາຄານແຫ່ງ ສປປ ລາວ ຈະກວດກາຄືນຄວາມຖືກຕ້ອງຂອງບັນຊີຕິດຕາມດັ່ງກ່າວ ແລະ ຖ້າຫາກເຫັນວ່າ ຖືກຕ້ອງຕາມຄວາມເປັນຈິງແລ້ວ ຈະອອກແຈ້ງການຢ່າງເປັນລາຍລັກອັກສອນ ລົບລ້າງໃບອະນຸຍາດສ້າງຕັ້ງ ພາຍໃນກຳນົດສິບ (10) ວັນ ນັບແຕ່ມື້ທີ່ໄດ້ຮັບບັນຊີຕິດຕາມດັ່ງກ່າວ.

3. ພາຍຫຼັງສຳເລັດການຊຳລະສະສາງບັນຊີ ທຸກໆບົດລາຍງານ ແລະ ໃບສະຫຼຸບຊັບສິນ ບັດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ສົ່ງໃຫ້ ທະນາຄານແຫ່ງ ສປປ ລາວ.

**ມາດຕາ 66. ຈຳນວນເງິນ ແລະ ໜີ້ສິນທີ່ບໍ່ຖືກທວງຄືນ**

1. ຈຳນວນເງິນທີ່ຍັງບໍ່ໄດ້ຖືກທວງຄືນ ໂດຍສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ ຫຼັງຈາກກາຍວັນທີ ທີ່ໄດ້ກຳນົດໄວ້ໃນແຈ້ງການປິດກິດຈະການ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຕາມທີ່ໄດ້ກ່າວໄວ້ໃນມາດຕາ 63 ຂ້າງເທິງນີ້, ຈຳນວນເງິນດັ່ງກ່າວນັ້ນ ແມ່ນຈະຖືກເກັບຮັກສາໄວ້ຢູ່ທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 3 ປີ. ໃນໄລຍະເວລາທີ່ຮັກສາເງິນດັ່ງກ່າວໄວ້ນັ້ນ, ທະນາຄານແຫ່ງ ສປປ ລາວ ຈະສືບຕໍ່ແຈ້ງການໃຫ້ແກ່ບັນດາຜູ້ຝາກເງິນ ຫລື ເຈົ້າໜີ້ ໂດຍຜ່ານທາງສື່ມວນຊົນຕ່າງໆ ເປັນແຕ່ລະໄລຍະ ຈົນກວ່າຄົບກຳນົດເວລາ 3 ປີ. ຖ້າຫາກກາຍກຳນົດເວລາທີ່ໄດ້ລະບຸໄວ້ນັ້ນ, ທະນາຄານແຫ່ງ ສປປ ລາວ ຈະນຳເອົາຈຳນວນເງິນດັ່ງກ່າວ ເຂົ້າບັນຊີລາຍຮັບຂອງຕົນ.

**ມາດຕາ 67. ການສົ່ງຮຸ້ນ**

ພາຍຫຼັງ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ຫັກຈຳນວນເງິນທີ່ສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ ທີ່ຍັງບໍ່ທັນໄດ້ມາທວງຄືນ ແລະ ຄ່າໃຊ້ຈ່າຍຕ່າງໆໃນໄລຍະເວລາເກັບຮັກສາເງິນ ດັ່ງກ່າວແລ້ວ ຈະສົ່ງຈຳນວນທຶນເບື້ອງຕົ້ນຄືນ (ຖ້າມີ) ໃຫ້ແກ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 68. ການຊຳລະສະສາງບັນຊີແບບບັງຄັບ**

ທະນາຄານແຫ່ງ ສປປ ລາວ ຈະສັ່ງໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງ ເຮັດການຊຳລະສະສາງບັນຊີແບບບັງຄັບ ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ:

1. ໄດ້ອອກແຈ້ງການລົບລ້າງ ຫລື ຖອນໃບອະນຸຍາດສ້າງຕັ້ງ;
2. ເຫັນວ່າສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດແຫ່ງດັ່ງກ່າວ ຫາກຂາດຄວາມໝັ້ນຄົງ, ມີຄວາມສ່ຽງສູງ ທີ່ອາດຈະສ້າງຄວາມເສຍຫາຍອັນໃຫຍ່ຫຼວງ ໃຫ້ແກ່ສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ ຫລື ອາດສົ່ງຜົນກະທົບຕໍ່ລະບົບເງິນຕາຂອງຊາດ;
3. ເຫັນວ່າສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຖືກລົ້ມລະລາຍຕາມຄຳຕັດສິນຂອງສານ.

**ມາດຕາ 69. ການແຕ່ງຕັ້ງຄະນະກຳມະການຊຳລະສະສາງບັນຊີແບບບັງຄັບ**

1. ພາຍໃນກຳນົດເວລາຫ້າ (5) ວັນລັດຖະການ ນັບແຕ່ມື້ທີ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄດ້ຖືກສັ່ງໃຫ້ດຳເນີນການຊຳລະສະສາງບັນຊີແບບບັງຄັບ, ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະກຳມະການສະເພາະກິດໜຶ່ງຂຶ້ນ ເພື່ອເຮັດການຊຳລະສະສາງບັນຊີ ຊຶ່ງຄະນະກຳມະການ ດັ່ງກ່າວ ແມ່ນຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງໂດຍກົງຂອງ ທະນາຄານ ແຫ່ງ ສປປ ລາວ.

2. ຄະນະກຳມະການສະເພາະກິດຕ້ອງສ້າງແຜນການ ແລະ ຂັ້ນຕອນ ກ່ຽວກັບການເຮັດຊຳລະສະສາງບັນຊີໃຫ້ແກ່ ສະມາຊິກ, ຜູ້ຝາກເງິນ ຫລື ເຈົ້າໜີ້ ພາຍໃນກຳນົດເວລາສິບສອງ (12) ເດືອນ ພາຍຫຼັງຄຳສັ່ງໃຫ້ມີການຊຳລະສະສາງບັນຊີແບບບັງຄັບ.

3. ແຜນການຊຳລະສະສາງບັນຊີ ຕ້ອງໄດ້ຮັບການອະນຸມັດເຫັນດີຢ່າງເປັນ ລາຍລັກອັກສອນ ຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 70. ຂໍ້ຈຳກັດໃນໄລຍະທີ່ດຳເນີນການຊຳລະສະສາງບັນຊີແບບບັງຄັບ**

1. ນັບແຕ່ມື້ທີ່ທະນາຄານແຫ່ງ ສປປ ລາວ ອອກແຈ້ງການສັ່ງໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດຳເນີນການຊຳລະສະສາງບັນຊີແບບບັງຄັບ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດັ່ງກ່າວຕ້ອງ:

(1). ຍົກເລີກສິດອຳນາດ ຂອງກອງປະຊຸມໃຫຍ່ສະມາຊິກ, ສະມາຊິກສະພາບໍລິຫານ, ຄະນະກຳມະການ ແລະ ຜູ້ອຳນວຍການ;

(2). ຢຸດຕິທຸກການເຄື່ອນໄຫວທຸລະກິດ.

2. ພາຍຫລັງໄດ້ຮັບຄໍາສັ່ງ ໃຫ້ດໍາເນີນການຊໍາລະສະສາງບັນຊີ ແບບບັງຄັບ ຈາກທະນາຄານແຫ່ງ ສປປ ລາວ:

(1). ທຸກເງື່ອນໄຂທີ່ເປັນພັນທະຕໍ່ໜີ້ສິນ ຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດແມ່ນໃຫ້ຖືວ່າເຖິງກໍານົດອາຍຸ;

(2). ການຊໍາລະເງິນ ຫລື ການໃຊ້ຊັບສິນອື່ນໆ ຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດພາຍໃນໄລຍະເວລາ 3 ເດືອນ ກ່ອນມີການແຕ່ງຕັ້ງຕົວແທນຊໍາລະສະສາງບັນຊີ ໃຫ້ແກ່ເຈົ້າໜີ້ ຫລື ພາກສ່ວນທີ່ມີການພົວພັນກັບ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດນັ້ນ ບໍ່ມີຜົນສັກສິດດ້ານກົດໝາຍ ຖ້າຫາກພົບວ່າ ມີການປະຕິບັດແບບບໍ່ຖືກຕ້ອງ ຫລື ປະກົດການເຂົ້າຂ້າງໃດໜຶ່ງ;

(3). ທຸກໆກິດຈະກໍາທີ່ສ້າງລາຍຮັບ ແລະ ທຸກໆລາຍຈ່າຍ ຕ້ອງໄດ້ຮັບການຄຸ້ມຄອງ ແລະ ອະນຸມັດຈາກຕົວແທນຊໍາລະສະສາງບັນຊີເທົ່ານັ້ນ.

**ມາດຕາ 71. ການລົ້ມລະລາຍ**

ການລົ້ມລະລາຍຂອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງ ສປປ ລາວ.

## ໝວດທີ IX
### ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 72. ການປັບໄໝທີ່ເປັນເງິນ**

ທະນາຄານແຫ່ງ ສປປ ລາວ ສາມາດດໍາເນີນມາດຕະການປັບໄໝຕໍ່ການລະເມີດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ລວມທັງຄະນະຜູ້ບໍລິຫານ ຫລື ພະນັກງານ ທັງເປັນບຸກຄົນ ຫລື ເປັນໝູ່ຄະນະ ເປັນຈໍານວນເງິນໜຶ່ງແສນ (100.000) ກີບ ຕໍ່ວັນ ຖ້າຫາກບໍ່ປະຕິບັດຕາມຂໍ້ກໍານົດສະບັບນີ້ວາງອອກ ຈົນກວ່າຈະໄດ້ຮັບການແກ້ໄຂຢ່າງຖືກຕ້ອງ.

**ມາດຕາ 73. ການສັ່ງໂຈະການເຄື່ອນໄຫວຊົ່ວຄາວ**

ໃນກໍລະນີ ທີ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງ ໄດ້ຮັບການແຈ້ງເຕືອນຈາກທະນາຄານແຫ່ງ ສປປ ລາວ ແຕ່ບໍ່ປະຕິບັດຕາມການແຈ້ງເຕືອນດັ່ງກ່າວ, ຈະຖືກສັ່ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເປັນໄລຍະເວລາບໍ່ເກີນຫົກ (6) ເດືອນ. ການສັ່ງໂຈະຊົ່ວຄາວນັ້ນຈະຖືກຢຸດຕິ ຖ້າຫາກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ ໄດ້ຈັດຕັ້ງປະຕິບັດຕາມການແຈ້ງເຕືອນຢ່າງ ຄົບຖ້ວນແລ້ວ.

**ມາດຕາ 74.	ການສັ່ງລົບລ້າງໃບອະນຸຍາດສ້າງຕັ້ງ**

1.	ທະນາຄານແຫ່ງ ສປປ ລາວ ອາດຈະສັ່ງລົບລ້າງໃບອະນຸຍາດສ້າງຕັ້ງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງໃນກໍລະນີທີ່ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດັ່ງກ່າວ ຍັງສືບຕໍ່ບໍ່ປະຕິບັດຕາມການແຈ້ງເຕືອນ ພາຍຫຼັງທີ່ໄດ້ໂຈະໃບອະນຸຍາດສ້າງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 73 ຂອງຂໍ້ກໍານົດສະບັບນີ້.

2.	ໃນກໍລະນີ ໃບອະນຸຍາດສ້າງຕັ້ງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຫາກຖືກສັ່ງລົບລ້າງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ ຕ້ອງໄດ້ດໍາເນີນການຊໍາລະສະສາງບັນຊີແບບບັງຄັບ ໂດຍສອດຄ່ອງກັບມາດຕາ 68 ເຖິງ 70 ຂອງຂໍ້ກໍານົດສະບັບນີ້.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 75.	ການຈັດຕັ້ງປະຕິບັດ**

1.	ບັນດາອົງການຈັດຕັ້ງຂອງລັດເປັນຕົ້ນອົງການຈັດຕັ້ງມະຫາຊົນ, ຂັ້ນແຂວງ, ເມືອງ, ບ້ານ, ຮ່ວມໝູ່ຂອງປະຊາຊົນ, ບຸກຄົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຫລື ວິສາຫະກິດພາກສ່ວນອື່ນໆ ທີ່ໄດ້ມີການສ້າງຕັ້ງ ຫລື ດໍາເນີນງານຜ່ານມາແລ້ວ, ເຄື່ອນໄຫວໃນປະຈຸບັນ ແລະ/ຫລື ພວມຈະມີການສ້າງຕັ້ງເຄື່ອນໄຫວໃນຮູບແບບດຽວກັນນີ້ ຫລື ຄ້າຍ ຄືກັນກັບກິດຈະກໍາການເງິນຈຸລະພາກ ຕ້ອງໄດ້ສະເໜີຂໍສ້າງຕັ້ງເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ນໍາທະນາຄານແຫ່ງ ສປປ ລາວ ຕາມເງື່ອນໄຂ ແລະ ແບບຟອມທີ່ໄດ້ ລະບຸໄວ້ໃນຂໍ້ກໍານົດສະບັບນີ້ພາຍໃນກໍານົດເວລາສິບສອງ (12) ເດືອນ, ນັບແຕ່ຂໍ້ກໍານົດສະບັບນີ້ແຈ້ງການອອກນໍາໃຊ້ເປັນຕົ້ນໄປ.

2.	ທະນາຄານແຫ່ງ ສປປ ລາວ ສາມາດດໍາເນີນມາດຕະການປັບໄໝຕໍ່ການລະເມີດ ຂອງຜູ້ດໍາເນີນກິດຈະກໍາທີ່ມີລັກສະນະການເງິນຈຸລະພາກ, ສະຖາບັນການເງິນໃດໜຶ່ງ ລວມທັງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ແລະ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ລວມທັງຄະນະຜູ້ບໍລິຫານ ຫລື ພະນັກງານ ທັງເປັນບຸກຄົນ ຫລື ເປັນ ໝູ່ຄະນະ ເປັນແຕ່ລະກໍລະນີ ຖ້າຫາກບໍ່ປະຕິບັດຕາມທີ່ໄດ້ລະບຸໄວ້ໃນມາດຕາ 72 ແລະ ມາດຕາ 73 ຂອງຂໍ້ກໍານົດສະບັບນີ້ ຈົນກວ່າຈະໄດ້ຮັບການແກ້ໄຂຢ່າງຖືກຕ້ອງ.

**ມາດຕາ 76.	ຜົນສັກສິດ**

ຂໍ້ກໍານົດສະບັບນີ້ ໃຊ້ປ່ຽນແທນ ກົດລະບຽບສະຫະກອນສິນເຊື່ອ ເລກທີ 02/ທຫລ ລົງວັນທີ 19 ພະຈິກ 1994 ແລະ ກົດລະບຽບ ກ່ຽວກັບການຄຸ້ມຄອງການສ້າງຕັ້ງ ແລະ ດໍາເນີນທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດແບບທົດລອງ ເລກທີ 256/ກຄທສ ລົງວັນທີ 12 ພຶດສະພາ 2004 ແລະ ມີຜົນສັກສິດນໍາໃຊ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ,**

## ເອກະສານຊ້ອນທ້າຍ ກ ສິດ ແລະ ຄວາມຮັບຜິດຊອບຂອງປະທານສະພາບໍລິຫານ

ປະທານສະພາບໍລິຫານມີສິດ ແລະ ຄວາມຮັບຜິດຊອບດັ່ງຕໍ່ໄປນີ້:

1. ກະກຽມວາລະກອງປະຊຸມສະພາບໍລິຫານ ທີ່ໄດ້ລະບຸບັນຫາຕ່າງໆທີ່ສະມາຊິກສະພາບໍລິຫານ ຕ້ອງການນໍາສະເໜີ ທີ່ກ່ຽວພັນກັບຄວາມຮັບຜິດຊອບຂອງສະພາບໍລິຫານ.
2. ຮຽກໂຮມ ແລະ ນໍາພາກອງປະຊຸມສະພາບໍລິຫານ.
3. ຊີ້ນໍາສະມາຊິກສະພາບໍລິຫານໃນການ ປະຕິບັດວຽກງານທີ່ຖືກມອບໝາຍໃຫ້ ແລະ ການປະຕິບັດສິດອໍານາດ ແລະ ຄວາມຮັບຜິດຊອບ.
4. ຊີ້ນໍາຜູ້ຈັດການໃນການຈັດຕັ້ງປະຕິບັດມະຕິຂອງສະພາບໍລິຫານ.
5. ລາຍງານຕໍ່ກອງປະຊຸມໃຫຍ່ສະມາຊິກ ກ່ຽວກັບການເຄື່ອນໄຫວຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
6. ຮັບປະກັນວ່າສະມາຊິກຂອງສະພາບໍລິຫານ ໄດ້ຮັບຂໍ້ມູນຢ່າງເຕັມສ່ວນ, ຖືກຕ້ອງ, ຊັດເຈນ, ທັນເວລາ ແລະ ເຂົ້າໃຈໄດ້ ກ່ຽວກັບບັນຫາທີ່ສະພາບໍລິຫານຕ້ອງໄດ້ພິຈາລະນາ.
7. ຮັບປະກັນວ່າມີເວລາພຽງພໍກ່ອນການປະຊຸມ ຫລື ລະຫວ່າງການປະຊຸມສະພາບໍລິຫານເພື່ອພິຈາລະນາ ແລະ ປຶກສາຫາລືກ່ຽວກັບບັນຫາທີ່ຫຍຸ້ງຍາກ ຫລື ບໍ່ສາມາດຕົກລົງກັນໄດ້.
8. ກະກຽມແຜນເຮັດວຽກ ແລະ ກໍານົດວຽກງານພາຍໃນກອບໜ້າວຽກຂອງສະມາຊິກສະພາບໍລິຫານ.
9. ຮັບປະກັນການສື່ສານທີ່ມີປະສິດທິຜົນ ກັບຜູ້ຖືຮຸ້ນ ແລະ ຮັບປະກັນວ່າສະມາຊິກສະພາບໍລິຫານມີຄວາມເຂົ້າໃຈກ່ຽວກັບທັດສະນະຂອງຜູ້ຖືຮຸ້ນ ຕໍ່ວຽກງານການຄຸ້ມຄອງ, ການຈັດຕັ້ງ ແລະ ການດໍາເນີນງານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
10. ນໍາພາການກໍານົດການພັດທະນາຄວາມຮູ້ຄວາມສາມາດ ແລະ ຄວາມຊໍານິຊໍານານທີ່ຈໍາເປັນໃຫ້ສະມາຊິກສະພາບໍລິຫານແຕ່ລະຄົນ ແລະ ສະມາຊິກສະພາບໍລິຫານໂດຍລວມ ໃນການປະຕິບັດໜ້າທີ່ຂອງພວກເຂົາເຈົ້າ ແລະ ເພື່ອຮັບປະກັນວ່າຄວາມຕ້ອງການໃນການພັດທະນາຂອງພວກເຂົາເຈົ້າໄດ້ຮັບການສະໜອງໃຫ້.
11. ຮັບປະກັນການປະຕິບັດງານຂອງສະມາຊິກສະພາບໍລິຫານແຕ່ລະຄົນ ແລະ ການປະຕິບັດງານຂອງສະພາບໍລິຫານໂດຍລວມ ຖືກປະເມີນຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.
12. ແຈ້ງຜົນການປະເມີນຜົນທີ່ໜ້າພໍໃຈຂອງສະມາຊິກສະພາບໍລິຫານຜູ້ໃດໜຶ່ງຕໍ່ໜ້າ ສະມາຊິກສະພາບໍລິຫານທັງໝົດ ແທນທີ່ຈະແຈ້ງໃຫ້ຊາບເປັນການສ່ວນຕົວ.
13. ອະນຸຍາດໃຫ້ໜຶ່ງໃນສະມາຊິກສະພາບໍລິຫານ ປະຕິບັດໜ້າທີ່ແທນປະທານສະພາບໍລິຫານໃນລະຫວ່າງທີ່ປະທານສະພາບໍລິຫານບໍ່ຢູ່.
14. ສິດ ແລະ ຄວາມຮັບຜິດຊອບອື່ນໆ ດັ່ງທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ກົດລະບຽບພາຍໃນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

## ເອກະສານຊ້ອນທ້າຍ ຂ ສິດ ແລະ ຄວາມຮັບຜິດຊອບຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານຈະມີສິດ ແລະ ຄວາມຮັບຜິດຊອບດັ່ງຕໍ່ໄປນີ້:

1. ຮ່ວມກັບສະມາຊິກແຕ່ລະຄົນຂອງສະພາບໍລິຫານ ຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດສອດຄ່ອງຕາມກົດໝາຍ ແລະ ກົດລະບຽບພາຍໃນຂອງສະຖາບັນ.
2. ນຳໃຊ້ສິດ ແລະ ຄວາມຮັບຜິດຊອບໃນນາມເປັນສະມາຊິກສະພາບໍລິຫານອີງຕາມໜ້າວຽກລະອຽດທີ່ໄດ້ກຳນົດໄວ້ຢ່າງຊື່ສັດສຸດຈະລິດ ແລະ ສົມເຫດສົມຜົນທີ່ສະມາຊິກສະພາບໍລິຫານທຸກຄົນ ແລະ ກອງປະຊຸມໃຫຍ່ສະມາຊິກເຫັນພ້ອມວ່າເປັນປະໂຫຍດສູງສຸດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ສະມາຊິກສະພາບໍລິຫານຕ້ອງປະຕິບັດ ແລະ ໃຫ້ຄວາມເອົາໃຈໃສ່ດັ່ງທີ່ບຸກຄົນທີ່ສົມເຫດສົມຜົນໃດໜຶ່ງທີ່ມີຕຳແໜ່ງດຽວກັນຄວນປະຕິບັດໃນກໍລະນີນັ້ນ.
3. ບໍລິຫານວຽກງານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດຢ່າງຍຸຕິທຳ ແລະ ບໍ່ລຳອຽງ.
4. ໃນເວລາຂອງການແຕ່ງຕັ້ງ ຫລື ພາຍໃນເວລາທີ່ສົມເຫດສົມຜົນໄລຍະໃດໜຶ່ງຫຼັງຈາກນັ້ນຕ້ອງແລະສືບຕໍ່ຄຸ້ນເຄີຍກັບວຽກງານຄຸ້ມຄອງ, ການຈັດຕັ້ງ ແລະ ການດຳເນີນທຸລະກິດ, ນະໂຍບາຍການບັນຊີ ແລະ ການລາຍງານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ລວມທັງຄວາມສາມາດໃນການອ່ານ ແລະ ເຂົ້າໃຈບົດລາຍງານຖານະການເງິນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ກະກຽມໂດຍເຈົ້າໜ້າທີ່ກວດສອບບັນຊີພາຍນອກ ແລະ ຖາມຄຳຖາມຢ່າງມີຄວາມໝາຍທີ່ກ່ຽວກັບວຽກງານຂອງຫົວໜ້າພະແນກ, ເຈົ້າໜ້າທີ່ກວດສອບພາຍໃນ ແລະ ເຈົ້າໜ້າທີ່ກວດສອບພາຍນອກ.
5. ສືບຕໍ່ເສີມຂະຫຍາຍຄວາມຮູ້ ແລະ ຄວາມສາມາດເພື່ອຮັບປະກັນວ່າການປະກອບສ່ວນຂອງພວກເຂົາເຈົ້າໃຫ້ແກ່ສະພາບໍລິຫານແມ່ນທັນກັບສະພາບການ ແລະ ກ່ຽວພັນກັບວຽກງານ.
6. ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງປະທານສະພາບໍລິຫານ.
7. ສະເໜີຕໍ່ປະທານສະພາບໍລິຫານຮຽກປະຊຸມສະໄໝວິສາມັນຂອງສະພາບໍລິຫານ.
8. ອອກຄຳສັ່ງໃຫ້ ບັນດາຫົວໜ້າພະແນກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະໜອງຂໍ້ມູນ ແລະ ເອກະສານກ່ຽວກັບອົງການຈັດຕັ້ງ, ການດຳເນີນທຸລະກິດ, ສະຖານະພາບດ້ານການເງິນ ແລະ ຜົນການດຳເນີນທຸລະກິດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.
9. ເຂົ້າຮ່ວມທຸກກອງປະຊຸມຂອງສະພາບໍລິຫານ ເພື່ອປຶກສາຫາລື ແລະ ລົງຄະແນນສຽງຕໍ່ກັບວຽກງານທັງໝົດຍົກເວັ້ນຈະຖືກຈຳກັດບໍ່ໃຫ້ເຂົ້າຮ່ວມເນື່ອງຈາກອາດມີຄວາມຂັດແຍ່ງທາງຜົນປະໂຫຍດ.
10. ຮັບຜິດຊອບດ້ວຍຕົນເອງກ່ຽວກັບການປະພຶດຂອງພວກເຂົາເຈົ້າຕໍ່ກອງປະຊຸມໃຫຍ່ສະມາຊິກ ແລະ ສະພາບໍລິຫານ.
11. ຈັດຕັ້ງປະຕິບັດການຕັດສິນໃຈຂອງກອງປະຊຸມໃຫຍ່ສະມາຊິກ ແລະ ມະຕິຂອງສະພາບໍລິຫານ.
12. ສິດ ແລະ ຄວາມຮັບຜິດຊອບອື່ນໆ ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບພາຍໃນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.